# ເຊໂປນມາຍຫູເດ

ໜັງສືຂ່າວ ຂອງບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ

ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ
万象矿业有限公司
CHIFENG LXML SEPON

ເມສາ 2022


## ໃນສະບັບນີ້


LXML ປະກອບສ່ວນ US$5 ລ້ານ ຍົກລະດັບເສັ້ນທາງ 28A

ໜ້າ 2

LXML ລາຍງານຄວາມຄືບໜ້າ ໃຫ້ແກ່ລັດຖະບານ ແລະ ຜູ້ມີສ່ວນຮ່ວມ

ໜ້າ 5

LXML ມອບ ມໍລະດົກທາງວັດທະນະທຳທີ່ໄດ້ຄົ້ນພົບ ໃຫ້ແກ່ ຖວທ

ໜ້າ 6

LXML ກອບກູ້ຜູ້ຂຸດຄົ້ນແຮ່ຜິດກົດໝາຍຢູ່ ແຂວງ ສະຫວັນນະເຂດ

ໜ້າ 12













# LXML ໄດ້ຮັບລາງວັນ ນັກທຸລະກິດຊັ້ນນໍາດີເດັ່ນ ໃນໄລຍະ COVID-19

**29 ທັນວາ 2021** - ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ໄດ້ຮັບລາງວັນ 'ນັກທຸລະກິດຊັ້ນນໍາດີເດັ່ນ' ໃນໄລຍະ COVID-19 ປະຈໍາປີ 2021 ຈັດໂດຍ ສະພາການຄ້າ ແລະ ອຸດສະຫະກໍາແຫ່ງຊາດລາວ (ສຄອຊ) ທີ່ຫໍປະຊຸມແຫ່ງຊາດ, ນະຄອນຫຼວງວຽງຈັນ.

LXML ໄດ້ຮັບການຍ້ອງຍໍຊົມເຊີຍຕໍ່ກັບການປະກອບສ່ວນຂອງຕົນ ໃນການຮັບມືກັບການແຜ່ລະບາດຂອງເຊື້ອພະຍາດ COVID-19 ໃນ ສປປ ລາວ.

ພະນະທ່ານ ພັນຄໍາ ວິພາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ໃຫ້ກຽດເຂົ້າຮ່ວມເປັນສັກຂີພິຍານ ເພື່ອເປັນນິມິດໝາຍ ແລະ ໃຫ້ຄວາມສໍາຄັນ ເຊິ່ງໃຫ້ກຽດມອບໂລ້ລາງວັນໂດຍ ທ່ານ ປອ ຄໍາແພງ ໄຊສົມແພງ, ລັດຖະມົນຕີກະຊວງອຸດສະຫະກໍາ ແລະ ການຄ້າ.

**ທ່ານ ສະໝານ ອະເນກາ, ຜູ້ອໍານວຍການໃຫຍ່ LXML** ກ່າວວ່າ: "ຂ້າພະເຈົ້າມີຄວາມຮູ້ສຶກພາກພູມໃຈ ທີ່ໄດ້ຮັບລາງວັນໃນນາມຕາງໜ້າ LXML". ທ່ານກ່າວຕື່ມອີກວ່າ: "ພວກເຮົາໄດ້ເຮັດວຽກຮ່ວມກັນເປັນທີມງານ ໃນໄລຍະຫຼາຍເດືອນຜ່ານມາເພື່ອ ກໍາຈັດພະຍາດ COVID-19 ອອກຈາກພາກສະໜາມຂອງພວກເຮົາ. ພາຍໃຕ້ການຮ່ວມມືກັບກະຊວງສາທາລະນະສຸກ, ຄະນະສະເພາະກິດ COVID-19 ຂັ້ນສູນກາງ, ແຂວງສະຫວັນນະເຂດ ແລະ ເມືອງວິລະບູລີ, ພວກເຮົາປະຕິບັດມາດຕະການເຄັ່ງຄັດໃນການກວດເຊື້ອ, ຕິດຕາມຜູ້ສໍາຜັດໃກ້ຊິດ, ຈໍາກັດບໍລິເວນ, ແລະ ແຍກປ່ຽວ ເພື່ອປົກປ້ອງພະນັກງານ, ຜູ້ຮັບເໝົາ ແລະ ຊຸມຊົນທ້ອງຖິ່ນ."

ນັບຕັ້ງແຕ່ມີການແຜ່ລະບາດຂອງເຊື້ອພະຍາດ COVID-19, LXML ໄດ້ປະກອບສ່ວນປະມານ $500,000 ໃຫ້ແກ່ລັດຖະບານ ສປປ ລາວ ໃນການຮັບມືກັບເຫດການສຸກເສີນ. LXML ສະໜັບສະໜູນການກວດເຊື້ອໃນເມືອງວິລະບູລີ ແລະ ສະໜອງອຸປະກອນດ້ານສຸຂະ ອະນາໄມໃຫ້ແກ່ພະແນກສາທາລະນະສຸກແຂວງສະຫວັນນະເຂດ.

ຂໍສະແດງຄວາມຂອບໃຈມາຍັງພະແນກສາທາລະນະສຸກ ແຂວງສະຫວັນນະເຂດ, 99% ຂອງພະນັກງານ LXML ແລະ ຜູ້ຮັບເໝົາ ຈໍານວນ 5000 ຄົນ ໄດ້ຮັບການສັກວັກຊີນປ້ອງກັນພະຍາດ COVID-19 ຢ່າງຄົບຖ້ວນ ແລະ ຈໍານວນຫຼາຍກໍໄດ້ຮັບວັກຊີນເຂັມກະຕຸ້ນເພີ່ມຕື່ມ. LXML ສືບຕໍ່ ຮັກສາມາດຕະການປ້ອງກັນ COVID-19 ຢ່າງເຄັ່ງຄັດ.

ນັບຕັ້ງແຕ່ເລີ່ມການດໍາເນີນງານໃນປີ 2003, LXML ໄດ້ປະກອບສ່ວນເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານ ສປປ ລາວ ຫຼາຍກວ່າ $1.6 ຕື້ ໂດຍຜ່ານການຈ່າຍອາກອນ, ພາສີຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ, $50 ລ້ານໃນການພັດທະນາໂຄງລ່າງພື້ນຖານ ແລະ ປົກປັກຮັກສາມໍລະດົກວັດທະນະທໍາ, $54 ລ້ານ ໃນການເກັບກູ້ລະເບີດທີ່ບໍ່ທັນແຕກ, ແລະ ຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາ ໂດຍຜ່ານການຈ້າງງານ, ຝຶກອົບຮົມ, ພັດທະນາທ້ອງຖິ່ນ ແລະ ສະໜັບສະໜູນແຜນງານຕ່າງໆ.

ສະມາຊິກຊຸມຊົນໃນເມືອງວິລະບູລີ ຫຼາຍກວ່າ 40.000 ຄົນ ໃນເຂດອ້ອມຂ້າງບໍ່ຄໍາ-ທອງເຊໂປນໄດ້ຮັບຜົນປະໂຫຍດກວ່າ $20 ລ້ານ ຈາກກອງທຶນພັດທະນາທ້ອງຖິ່ນ. ລາຍຮັບຂອງຊຸມຊົນ ໂດຍຜ່ານກຸ່ມທຸລະກິດທ້ອງຖິ່ນ ສະສົມກວ່າ $49 ລ້ານ.

# ແຂວງສະຫວັນນະເຂດ ຮ່ວມກັບ LXML ນຳໃຊ້ກອງທຶນ ຟື້ນຟູໂຄງການບໍ່ຄຳ-ທອງ ເຊໂປນ ຈຳນວນ $5 ລ້ານ ເຂົ້າໃນການປັບປຸງເສັ້ນທາງ 28A




ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML (ຊ້າຍ) ແລະ ທ່ານ ວາລີຍະ ສີຈັນທອງທິບ, ຫົວໜ້າພະແນກ ແຜນການ ແລະ ການລົງທຶນ ແຂວງສະຫວັນນະເຂດ (ຂວາ) ໃນພິທີເຊັນບົດບັນທຶກຄວາມເຂົ້າໃຈ ທີ່ຮ້ານອາຫານ ລາວເດີມ ເມື່ອວັນທີ 5 ເມສາ 2022.

**5 ເມສາ 2022** - ອຳນາດການປົກຄອງແຂວງສະຫວັນນະເຂດ ແລະ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງ ເຊໂປນ ໄດ້ມີການລົງນາມໃນບົດບັນທຶກຄວາມເຂົ້າໃຈ (MoU) ເພື່ອຍົກລະດັບເສັ້ນທາງຂອງລັດ ເລກທີ 28A ໂດຍການປູຢາງສອງຊັ້ນ ມີຄວາມຍາວ 41,56 ກິໂລແມັດ ແຕ່ບ້ານນາບໍ່ ຫາ ເມືອງວິລະບູລີ ເຊິ່ງເປັນທີ່ຕັ້ງຂອງ ບໍ່ຄຳ-ທອງ ເຊໂປນ.

ໂຄງການຍົກລະດັບເສັ້ນທາງດັ່ງກ່າວນີ້ ຈະສະໜອງການເຂົ້າເຖິງເສັ້ນທາງໃຫ້ແກ່ ຊຸມຊົນທ້ອງຖິ່ນຈາກເມືອງວິລະບູລີ ຫຼາຍກວ່າ 40 000 ຄົນ.

ໃນຜ່ານມາ ເສັ້ນທາງ 28A ດັ່ງກ່າວ ເປັນເສັ້ນທາງປູຢາງ LXML ໄດ້ສ້າງຂຶ້ນ ມາແຕ່ປີ 2005 ເພື່ອເຊື່ອມຕໍ່ກັບເສັ້ນທາງ ເລກທີ 9 ຈາກບ້ານນາບໍ່, ເມືອງເຊໂປນ ຫາ ເມືອງວິລະບູລີ ແລະ ເປັນແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ທີ່ສຳຄັນໃຫ້ແກ່ການຂົນສົ່ງສິນຄ້າ ແລະ ການພັດທະນາ ໂດຍເຊື່ອມຕໍ່ ສປປ ລາວ ກັບປະເທດຫວຽດນາມ ແລະ ໄທ ກໍຄື ເປີດທາງສູ່ເຂດຊົນນະບົດ ໃຫ້ມີການຜະລິດກະສິກຳ ແລະ ເສດຖະກິດອື່ນໆ ໃຫ້ໄດ້ດີ.

ປະຈຸບັນ ເສັ້ນນທາງດັ່ງກ່າວ ແມ່ນໄດ້ເປ່ເພເສຍຫາຍຫຼາຍບ່ອນ ຍ້ອນມີການໃຊ້ງານມາຍາວນານກວ່າ ທົດສະວັດ ເຮັດໃຫ້ການ ສັນຈອນ, ຂົນສົ່ງສິນຄ້າ ເພື່ອຮັບໃຊ້ໃນການຜະລິດ ແລະ ການດຳລົງຊີວິດຂອງປະຊາຊົນໃນເຂດດັ່ງກ່າວ ໄດ້ພົບຄວາມຫຍຸ້ງຍາກ ໂດຍສະເພາະແມ່ນໃນໄລຍະລະດູຝົນ.

ໂຄງການຍົກລະດັບເສັ້ນທາງຂອງລັດ ເລກທີ 28 ນີ້ ຈະໄດ້ນຳໃຊ້ເງິນຈາກກອງທຶນຟື້ນຟູໂຄງການບໍ່ຄຳ-ທອງເຊໂປນ ຈຳນວນ US$ 5 ລ້ານ ເຊິ່ງເປັນເງິນສະສົມ ທີ່ LXML ເປັນຜູ້ຮັກສາໄວ້ ເພື່ອນຳໃຊ້ໃນການຟື້ນຟູສະພາບແວດລ້ອມ ແລະ ສັງຄົມພາຍຫຼັງການປິດບໍ່ ໃນອະນາຄົດ.

ກ່ອນປີ 2000 ເມືອງວິລະບູລີ ຍັງຖືວ່າເປັນເຂດຊົນນະບົດຫ່າງໄກສອກຫຼີກ ເສັ້ນທາງດິນດັ້ງເດີມແມ່ນຄັບແຄບ ແລະ ມີນ້ຳຖ້ວມໃນລະດູຝົນ ເຮັດໃຫ້ທາງເລືອກໃນການຂົນສົ່ງມີຄວາມຈຳກັດ. ເສັ້ນທາງກໍເປັນບວກເປັນຕົມ ທີ່ຫຍຸ້ງຍາກລຳບາກທີ່ສຸດ. ການເດີນທາງດ້ວຍລົດ ຈາກບ້ານ ນາບໍ່ ຫາ ເມືອງວິລະບູລີ ແມ່ນໃຊ້ເວລາຢ່າງຕ່ຳ ເປັນ 2 ມື້ ຈຶ່ງຮອດ. ນອກຈາກນັ້ນ, ເມືອງວິລະບູລີ ກໍເປັນເຂດທີ່ໄດ້ມີການຖິ້ມລະເບີດຢ່າງຫຼວງຫຼາຍ ແລະ ຜົນກະທົບທີ່ຕາມມາຈາກລະເບີດຝັງດິນທີ່ບໍ່ທັນແຕກ ກໍເປັນອັນຕະລາຍຢ່າງມະຫາສານ.

**ທ່ານ ວຽງທະວີສອນ ເທບພະຈັນ, ຮອງເຈົ້າແຂວງສະຫວັນນະເຂດ** ໄດ້ກ່າວວ່າ: "ໂດຍຕາງໜ້າໃຫ້ປະຊາຊົນເມືອງວິລະບູລີ ແລະ ແຂວງສະຫວັນນະເຂດ, ຂ້າພະເຈົ້າຂໍສະແດງຄວາມຂອບໃຈ ມາຍັງ LXML ທີ່ໄດ້ປະກອບສ່ວນຕໍ່ການພັດທະນາໃນ ສປປ ລາວ ແລະ ໃຫ້ການຮ່ວມໄມ້ ຮ່ວມມືອັນດີ ໃນການຍົກລະດັບເສັ້ນທາງ 28A ໃນຄັ້ງນີ້."

ເປັນກຽດລົງນາມໃນ MoU ຄັ້ງນີ້ມີ ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML ແລະ ທ່ານ ວາລີຍະ ສີຈັນທອງທິບ, ຫົວໜ້າພະແນກແຜນການ ແລະ ການລົງທຶນ ແຂວງສະຫວັນນະເຂດ ໂດຍການເປັນສັກຂີພະຍານຂອງ ທ່ານ ວຽງທະວີສອນ ເທບພະຈັນ, ຮອງເຈົ້າແຂວງສະຫວັນນະເຂດ, ພະແນກການອ້ອມຂ້າງ ແຂວງ, ພ້ອມດ້ວຍອະດີດການນຳຂອງແຂວງ, ຫົວໜ້າຜະແນກໂຍທາທິການແຂວງ, ຜູ້ຕາງໜ້າອົງການຈັດຕັ້ງມະຫາຊົນ, ອຳນາດການປົກຄອງເມືອງວິລະບູລີ, ທີ່ປຶກສາ ແລະ ພະນັກງານ LXML.

**ທ່ານ ສະໝານ ອະເນກາ** ໄດ້ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ ໂຄງການນີ້ ແລະ ການຮ່ວມມືທີ່ດີສະເໝີມາ ກັບແຂວງສະຫວັນນະເຂດ ຈະຮັບປະກັນໃຫ້ປະຊາຊົນໄດ້ສາມາດເດີນທາງຢ່າງປອດໄພ ແລະ ສາມາດນຳເອົາສິນຄ້າຕົນເຂົ້າເຖິງຕະຫຼາດ. ການລົງທຶນໃໝ່ນີ້ ຈະຮັບປະກັນຊີວິດການເປັນຢູ່ທີ່ດີຂຶ້ນສຳລັບຄົນທ້ອງຖິ່ນ ຈາກ ກິດຈະກຳດ້ານກະສິກຳ, ການທ່ອງທ່ຽວ ແລະ ເສດຖະກິດທີ່ຍືນຍົງພາຍຫຼັງທີ່ບໍ່ຄຳ–ທອງ ເຊໂປນ ປິດລົງໃນອະນາຄົດ."

ມາຮອດປັດຈຸບັນ, ທຸກໆບ້ານຢູ່ໃນເມືອງວິລະບູລີ ແມ່ນມີເສັ້ນທາງເຂົ້າເຖິງ.

ນັບຕັ້ງແຕ່ເລີ່ມການດຳເນີນການຂຸດຄົ້ນ–ຜະລິດຄຳ–ທອງ ໃນປີ 2003 ເປັນຕົ້ນມາ, LXML ໄດ້ລົງທຶນປະມານ US$20 ລ້ານ ເພື່ອກໍ່ສ້າງ ແລະ ບຳລຸງຮັກສາເສັ້ນທາງທ້ອງຖິ່ນ ພາຍໃນເມືອງ ລວມທັງເສັ້ນທາງ 28A. ນອກຈາກນັ້ນ, LXML ຍັງສະໜອງທຶນຈາກ ກອງທຶນພັດທະນາຊຸມຊົນນັບເປັນມູນຄ່າ US$750 000 ຕໍ່ປີ ໃຫ້ແກ່ເມືອງວິລະບູລີ ເຊິ່ງສ່ວນ ໜຶ່ງຂອງທຶນກໍຖືກແບ່ງເຂົ້າໃນການກໍ່ສ້າງ ແລະ ສ້ອມແປງເສັ້ນທາງທ້ອງຖິ່ນ ບວກກັບໂຄງການບໍລິການດ້ານສາທາລະນະສຸກພື້ນຖານ, ການສຶກສາ ແລະ ຄວາມໝັ້ນຄົງດ້ານສະບຽງອາຫານ.

ນອກຈາກນີ້, ບໍລິສັດຍັງໄດ້ລົງທຶນປະມານ US$34 ລ້ານ ໃນການກໍ່ສ້າງ ແລະ ບຳລຸງຮັກສາຕາໜ່າງໄຟຟ້າແຫ່ງຊາດ ຈາກ ເມືອງທ່າແຂກ ເຖິງ ມະຫາໄຊ ດ້ວຍການຮ່ວມມືກັບລັດວິສາຫະກິດໄຟຟ້າ ລາວ.

ນັບຕັ້ງແຕ່ເລີ່ມການດຳເນີນການຂຸດຄົ້ນບໍ່ແຮ່ເປັນຕົ້ນມາ, LXML ໄດ້ສະໜອງລາຍຮັບໂດຍກົງຫຼາຍກວ່າ US$1.6 ຕື້ ໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍຄ່າພາສີຊັບພະຍາກອນແຮ່ທາດ, ເງິນປັນຜົນ ແລະ ພາສີ–ອາກອນຕ່າງໆ. ສ່ວນຜົນປະໂຫຍດທາງອ້ອມ ເປັນຕົ້ນການສ້າງວຽກເຮັດງານທຳ, ການຝຶກອົບຮົມ ແລະ ການສະໜັບສະໜູນທຸລະກິດທ້ອງຖິ່ນ ນັ້ນ ໄດ້ຫັນປ່ຽນ ເມືອງວິລະບູລີ ຈາກ ສະຖານະ ໜຶ່ງໃນເມືອງທີ່ທຸກຍາກທີ່ສຸດຂອງ ສປປ ລາວ ສູ່ ເມືອງທີ່ມີເສດຖະກິດຊົນນະບົດທີ່ຂະຫຍາຍໂຕຢ່າງວ່ອງໄວ.



ສ່ວນໜຶ່ງຂອງຖະໜົນ 28A ໃນຕົວເມືອງ ວິລະບູລີ, ແຂວງສະຫວັນນະເຂດ.



# LXML ຈັດພິທີເປີດ ອຸໂມງທາງເຂົ້າ ເພື່ອເຈາະສຳຫຼວດບໍ່ແຮ່ໃຕ້ດິນ



ພິທີໃສ່ບາດເພື່ອລິເລີ່ມການເຈາະສຳຫຼວດບໍ່ແຮ່ໃຕ້ດິນທັນສະໄໝແຫ່ງທຳອິດໃນ ສປປ ລາວ.

**4 ກຸມພາ 2022** - ກົງກັບ ມື້ຂຶ້ນ 3 ຄ່ຳ ເດືອນ 3 ລາວ, ຄະນະຜູ້ບໍລິຫານພ້ອມດ້ວຍພະນັກງານຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງເຊໂປນ ໄດ້ຈັດພິທີຕາມຮີດຄອງປະເພນີ ເພື່ອສະເຫຼີມສະຫຼອງການເປີດ ອຸໂມງທາງເຂົ້າ ເພື່ອເຈາະສຳຫຼວດບໍ່ແຮ່ໃຕ້ດິນ ຢູ່ ພາກສະໜາມບໍ່ຄຳ-ທອງ ເຊໂປນ. ໂຄງການດັ່ງກ່າວນີ້ ແນໃສ່ສ້າງບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຢູ່ໃນ ສປປ ລາວ.

**ທ່ານ ພໍ ແຮຣິສ໌, ຜູ້ຈັດການໃຫຍ່ LXML** ໄດ້ກ່າວວ່າ: "ໂຄງການຄຳ-ທອງເຊໂປນ ມີປະຫວັດສາດການຂຸດຄົ້ນບໍ່ແຮ່ມາຫຼາຍພັນປີ. ການພັດທະນາໃໝ່ນີ້ ຈະຍືດອາຍຸຂອງບໍ່ຄຳ-ທອງ ເຊໂປນ ດ້ວຍ ອຸປະກອນທີ່ທັນສະໄໝ ແລະ ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ນຳໜ້າໃນໂລກ."

LXML ຈະນຳເອົາຊ່ຽວຊານ ກໍຄື ຄວາມຊຳນິຊຳນານ ແລະ ອຸປະກອນທີ່ມີຄຸນຄ່າ ມານຳໃຊ້ເຂົ້າໃນໂຄງການຢູ່ ສປປ ລາວ ແລະ ໝັ້ນໃຈວ່າ ໂຄງການດັ່ງກ່າວຈະປະສົບຜົນສຳເລັດ. ວຽກງານສຳຫຼວດ ຢູ່ ບໍ່ໃຕ້ດິນແມ່ນຈະເລີ່ມໃນເໜືອງເກົ່າ ຢູ່ ບໍ່ຄຳ-ທອງ ເຊໂປນ.LXML ພວມປຶກສາຫາລືກັບ ຂະແໜງການພາກລັດທີ່ກ່ຽວຂ້ອງ ກ່ຽວກັບລາຍລະອຽດ ແລະ ຜົນກະທົບຕ່າງໆທີ່ອາດເກີດຂຶ້ນ.

**ທ່ານ ພໍ ແຮຣິສ໌** ໄດ້ກ່າວຕື່ມວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈເປັນຢ່າງຍິ່ງ ທີ່ LXML ໄດ້ປະກອບສ່ວນຕໍ່ການພັດທະນາເສດຖະກິດ-ສັງຄົມ ໃນ ສປປ ລາວ. ບໍລິສັດແມ່ ຊີເຟີງ ຂຸດຄົ້ນຄຳ ໄດ້ລົງທຶນມະຫາສານເຂົ້າໃນໂຮງງານ ແລະ ອຸປະກອນ ເພື່ອໃຫ້ສາມາດກັບຄືນມາຜະລິດ ແລະ ຂະຫຍາຍການຜະລິດຄຳ ຢູ່ ໂຄງການຄຳ-ທອງເຊໂປນ. ຂ້າພະເຈົ້າແນ່ໃຈວ່າ ໂຄງການບໍ່ແຮ່ໃຕ້ດິນນີ້ ຈະເປັນຕົວຢ່າງທີ່ດີສຳລັບ ຜູ້ປະກອບການຂຸດຄົ້ນບໍ່ແຮ່ອື່ນໆໃນ ປະເທດ ແລະ ຈະເປັນໂອກາດໃຫ້ ພັດທະນາຊັບພະຍາກອນແຮ່ທາດຢູ່ພາກສະໜາມອື່ນໆຢ່າງຍືນຍົງດ້ວຍການນຳໃຊ້ເຕັກນິກທີ່ຄ້າຍຄືກັນນີ້."

LXML ໄດ້ ດຳເນີນການຂຸດຄົ້ນບໍ່ແຮ່ຄຳ-ທອງເຊໂປນ ແບບບໍ່ເປີດຕັ້ງແຕ່ປີ 2003 ເປັນຕົ້ນມາ. ໃນສອງທົດສະຫວັດຜ່ານມາ, LXML ໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ ແລະ ຄ່າຊັບພະຍາກອນແຮ່ທາດ, ຫຼາຍຮ້ອຍລ້ານໂດລາເປັນຜົນປະໂຫຍດທາງອ້ອມ ຜ່ານການພັດທະນາຊຸມຊົນ, ການສ້າງວຽກເຮັດງານທຳ ແລະ ການຝຶກອົບຮົມສ້າງສີມືແຮງງານ. LXML ໝາຍໝັ້ນ ເປັນບໍລິສັດບໍ່ແຮ່ຕົວແບບທີ່ດີເລີດ ແລະ ເປັນຄູ່ຮ່ວມພັດທະນາ ຢູ່ໃນ ສປປ ລາວ.

# ປະທານ ຊີ່ເຟີງ ຂຸດຄົ້ນຄຳ ຮ່ວມສະເຫຼີມສະຫຼອງ ເປີດ ໂຮງງານອົກຊີແຊນ ຢູ່ ບໍ່ຄຳ-ທອງ ເຊໂປນ

**02 ສິງຫາ 2021** - ປະທານ ບໍລິສັດ ຊີເຟີງຂຸດຄົ້ນຄຳ ທ່ານ ຫວາງ ຈຽນຫົວ ໄດ້ໃຫ້ກຽດເປັນສັກຂີພິຍານ ການເປີດໂຮງງານອົກຊີແຊນຢ່າງເປັນທາງການ ຢູ່ ໂຄງການຄຳ-ທອງເຊໂປນ ພ້ອມທັງສະເຫຼີມສະຫຼອງນິມິດໝາຍສຳຄັນນີ້ກັບ ທີມງານຂອງ LXML.

ໂຮງງານອົກຊີແຊນໃໝ່ ເປັນອົງປະກອບໜຶ່ງຂອງ 'ໂຄງການເຊໂປນ 2.5' ຂອງ LXML ທີ່ຖືກອອກແບບມາ ເພື່ອເພີ່ມກຳລັງການປ້ອນແຮ່ເຂົ້າໂຮງງານຜະລິດຄຳເຄົ້າ ຈາກ 1,5 ລ້ານໂຕນຕໍ່ປີ ເປັນ 2,5 ລ້ານໂຕນ ຕໍ່ປີ. ບໍລິສັດ ຊີເຟີງ ໄດ້ລົງທຶນຫຼາຍຮ້ອຍລ້ານໂດລາສະຫະລັດ ເພື່ອຮັບປະກັນອະນາຄົດຂອງ LXML. ການລົງທຶນເຫຼົ່ານີ້ຈະສະໜັບສະໜູນ ຜົນການຜະລິດຄຳທີ່ເພີ່ມຂຶ້ນ ແລະ ຍືດອາຍຸຂອງບໍ່ຄຳ-ທອງເຊໂປນໄປອີກ 10 ປີ ຢ່າງຕ່ຳ.

**ທ່ານ ຫວາງ ຈ້ຽນຫົວ**, ໄດ້ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈ ທີ່ໄດ້ເຫັນຄວາມຄືບໜ້າຢ່າງກ້າວກະໂດດຂອງ ໂຄງການຄຳ-ທອງເຊໂປນ ໃນໄລຍະສອງປີຜ່ານມານີ້. ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງ ພະນັກງານ ແລະ ຜູ້ຮັບເໝົາຂອງພວກເຮົາ, ກໍຄື ການຮ່ວມມືທີ່ເຂັ້ມແຂງກັບ ລັດຖະບານ ແລະ ຊຸມຊົນ. ສປປ ລາວ ເປັນບ່ອນທີ່ເອື້ອອຳນວຍແກ່ການລົງທຶນ ແລະ ການດຳເນີນທຸລະກິດ."

ໃນວາລະທີ່ ທ່ານ ຫວາງ ມາຢ້ຽມຢາມຄັ້ງນີ້, ທ່ານ ໄດ້ພົບປະກັບ ພະນັກງານຂອງໂຄງການຄຳ-ທອງເຊໂປນ ແລະ ຜູ້ມີສ່ວນຮ່ວມຈາກ ກະຊວງພະລັງງານ ແລະ ບໍ່ແຮ່.



ການກໍ່ສ້າງໂຮງງານ ອົກຊີແຊນໃນຍາມກາງຄືນ

# ກຳມະການ ກົມການເມືອງສູນກາງພັກ, ປະທານຄະນະກວດກາສູນກາງພັກ ຢ້ຽມຢາມພາກສະໜາມ ເຊໂປນ



**16 ກໍລະກົດ 2021** - ພະນະທ່ານ ຄຳພັນ ພົມມະທັດ, ກຳມະການກົມການເມືອງສູນກາງພັກ, ເລຂາທິການສູນກາງພັກ, ປະທານຄະນະກວດກາສູນກາງພັກ, ປະທານ ອົງການກວດກາແຫ່ງລັດ ແລະ ຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງຂັ້ນສູນກາງ ພ້ອມດ້ວຍຄະນະ ແລະ ການນຳແຂວງສະຫວັນນະເຂດ ໄດ້ໃຫ້ກຽດຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນ ເພື່ອຊົມການຜະລິດຄຳທີ່ເພີ່ມຂຶ້ນ ກໍຄືແຜນການກ່ຽວກັບໂຄງການຄຳ, ພ້ອມທັງຮັບຟັງການລາຍງານກ່ຽວກັບ ຜົນສຳເລັດດ້ານການປະຕິບັດວຽກງານສິ່ງແວດລ້ອມ, ຄວາມປອດໄພ, ມາດຕະການປ້ອງກັນໂຄວິດ-19, ການພັດທະນາຊຸມຊົນຂອງບໍລິສັດ ແລະ ການຮ່ວມມືທີ່ດີຢ່າງສະເໝີມາ ກັບອຳນາດການປົກຄອງທ້ອງຖິ່ນ.

ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ເປັນວິສາຫະກິດແບບຢ່າງໃນ ສປປ ລາວ ແລະ ໄດ້ຮັບລາງວັນຍ້ອງຍໍລະດັບດີເລີດ (A+) ຢ່າງສະເໝີມາ ເຊິ່ງມອບໂດຍ ກະຊວງພະລັງງານ ແລະ ບໍ່ແຮ່ ສຳລັບ ການປະຕິບັດໄດ້ມາດຕະຖານສາກົນດ້ານການຂຸດຄົ້ນບໍ່ແຮ່.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "LXML ມີຄວາມມຸ່ງໝັ້ນ ຕໍ່ການຮ່ວມມື ແລະ ເຮັດວຽກຮ່ວມກັນຢ່າງຕັ້ງໜ້າ ກັບລັດຖະບານ ໃນນາມຄູ່ຮ່ວມພັດທະນາ. LXML ມີຄວາມພາກພູມໃຈສຳລັບການປະກອບສ່ວນ ຕໍ່ການພັດທະນາເສດຖະກິດ-ສັງຄົມໃນ ສປປ ລາວ."

ໃນຖານະຄູ່ຮ່ວມພັດທະນາ ແລະ ຜູ້ຈ່າຍພາສີອາກອນສຳຄັນໃນ ສປປ ລາວ, LXML ມີຄວາມມຸ່ງໝັ້ນເປັນບໍລິສັດຂຸດຄົ້ນບໍ່ແຮ່ທີ່ດີເລີດ ແລະ ສ້າງຄວາມອຸດົມຮັ່ງມີໃຫ້ແກ່ສັງຄົມ.

ການລົງຢ້ຽມຢາມ ບໍ່ຄຳ-ທອງ ເຊໂປນໃນຄັ້ງນີ້ ແມ່ນເປັນພາກສ່ວນໜຶ່ງ ໃນພາລະກິດຂອງລັດຖະບານ ໃນແຂວງ ບໍລິຄຳໄຊ, ສະຫວັນນະເຂດ ແລະ ຈຳປາສັກ ໃນລະຫວ່າງວັນທີ 14 ຫາ 21 ມິຖຸນາ 2021.

# LXML ສະໜັບສະໜູນທຸລະກິດລາວ




*ທ່ານ ສະໝານອະເນກາ (ຊ້າຍ) ມອບ 80 ລ້ານກີບ ໃຫ້ແກ່ ທ່ານ ດາວວອນ ພະຈັນທະວົງ (ຂວາ).*

**ກຸມພາ 2022** - ຜູ້ອຳນວຍການໃຫຍ່ຂອງ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງ ເຊໂປນ, ທ່ານ ສະໝານ ອະເນກາ ໄດ້ມອບ 80 ລ້ານກີບ ໃຫ້ແກ່ ທ່ານ ດາວວອນ ພະຈັນທະວົງ, ຮອງປະທານກິຕິມະສັກຂອງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ ລາວ (LNCCI).

**ທ່ານ ສະໝານ ອະເນກາ** ໄດ້ກ່າວວ່າ: "ການປະກອບສ່ວນນີ້ຈະສືບຕໍ່ສະໜັບສະໜູນການສ້າງຄວາມອາດສາມາດ ແລະ ສົ່ງເສີມພາກທຸລະກິດຢູ່ໃນ ສປປ ລາວ ໂດຍສະເພາະ ໃນໄລຍະການຟື້ນຟູຈາກ ຜົນກະທົບຂອງການລະບາດພະຍາດ COVID-19."

ປີນີ້ເປັນປີທີ 9 ທີ່ LXML ໄດ້ປະກອບສ່ວນຕໍ່ LNCCI ໃນຖານະທີ່ເປັນສະມາຊິກ ເພື່ອສະໜັບສະໜູນຄວາມອາດສາມາດຂອງພາກທຸລະກິດໃນ ສປປ ລາວ.

LXML ເປັນທຸລະກິດຂະໜາດໃຫຍ່ໃນ ສປປ ລາວ ທີ່ ດຳເນີນການຂຸດຄົ້ນ-ປຸງແຕ່ງ-ຜະລິດແຮ່ທອງ-ຄຳ ແບບບໍ່ເປີດໜ້າດິນ ຢູ່ໃນແຂວງສະຫວັນນະເຂດ ຕັ້ງແຕ່ປີ 2003. ໃນສອງທົດສະວັດຜ່ານມາ, LXML ໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ ແລະ ຄ່າຊັບພະຍາກອນແຮ່ທາດ, ຫຼາຍຮ້ອຍລ້ານໂດລາເປັນຜົນປະໂຫຍດທາງອ້ອມຜ່ານການພັດທະນາຊຸມຊົນ, ການສ້າງວຽກເຮັດງານທຳ ແລະ ການຝຶກອົບຮົມສ້າງສີມືແຮງງານ.

ໃນຊຸມຊົນເມືອງວິລະບູລີ ໄດ້ມີປະຊາຊົນກວ່າ 40.000 ຄົນ ທີ່ໄດ້ຮັບຜົນປະໂຫຍດຈາກ ໂຄງການພັດທະນາຊຸມຊົນ ຂອງໂຄງການຄຳ-ທອງເຊໂປນ ລວມມູນຄ່າ US$20 ລ້ານ ແລະ ລາຍໄດ້ຂອງກຸ່ມທຸລະກິດທ້ອງຖິ່ນກໍໄດ້ທະວີຄູນຂຶ້ນເປັນ US$49 ລ້ານ.

ໃນຕົ້ນເດືອນນີ້, LXML ໄດ້ສະເຫຼີມສະຫຼອງການເປີດອຸມົງທາງເຂົ້າເພື່ອເຈາະສຳຫຼວດບໍ່ແຮ່ໃຕ້ດິນຢູ່ພາກສະໜາມບໍ່ຄຳ-ທອງ ເຊໂປນ. ໂຄງການດັ່ງກ່າວແນໃສ່ສ້າງບໍ່ແຮ່ໃຕ້ດິນທີ່ທັນສະໄໝແຫ່ງທຳອິດຢູ່ໃນ ສປປ ລາວ (ອ່ານໜ້າທີ 3). ການພັດທະນາໃໝ່ນີ້ຈະຍືດອາຍຸຂອງບໍ່ຄຳ-ທອງ ເຊໂປນ ດ້ວຍອຸປະກອນທີ່ທັນສະໄໝ ແລະ ເຕັກນິກການຂຸດຄົ້ນບໍ່ແຮ່ທີ່ນຳໜ້າໃນໂລກ.

LXML ໄດ້ຮັບໃບຍ້ອງຍໍປະເພດ A+ ຈາກລັດຖະບານລາວ ຢ່າງສະເໝີມາເປັນໄລຍະ 10 ປີ ແລະ ທັງໄດ້ຮັບລາງວັນຫຼາຍປະເພດ ທີ່ຮັບຮູ້ ການປະກອບສ່ວນຂອງບໍລິສັດເຂົ້າໃນການພັດທະນາ ເສດຖະກິດ ແລະ ສັງຄົມຂອງ ສປປ ລາວ ລວມທັງ: ລາງວັນຜູ້ນຳທຸລະກິດດີເດັ່ນ 2021 ໃນການປ້ອງກັນ COVID-19 ໃນ ສປປ ລາວ, ລາງວັນທຸລະກິດອາຊຽນ 2020 ສຳລັບການສະກັດກັ້ນ COVID-19, ແລະ ລາງວັນ "ອາຊຽນ" ດີເດັ່ນດ້ານແຮ່ທາດ ໃນປີ 2019 ແລະ 2017.

LXML ໝາຍໝັ້ນ ເປັນບໍລິສັດບໍ່ແຮ່ຕົວແບບທີ່ດີເລີດ ແລະ ເປັນຄູ່ຮ່ວມພັດທະນາ ຢູ່ໃນ ສປປ ລາວ.



# LXML ລາຍງານຄວາມຄືບໜ້າ ກ່ຽວກັບ ບໍ່ຄຳ-ທອງ ເຊໂປນ ໃຫ້ແກ່ລັດຖະບານ ແລະ ຜູ້ມີສ່ວນຮ່ວມຈາກຊຸມຊົນ ໃນກອງປະຊຸມ 6 ເດືອນທ້າຍປີ ຄັ້ງທີ 28









**10 ສິງຫາ 2021** – LXML ໄດ້ລາຍງານກ່ຽວກັບຄວາມຄືບໜ້າ ແລະ ອະນາຄົດຂອງບໍ່ຄຳ-ທອງເຊໂປນ ໃຫ້ແກ່ ຜູ້ຕາງໜ້າ 60 ທ່ານ ຈາກ ພາກລັດຖະບານ ແລະ ຊຸມຊົນ. ຜູ້ຈັດການໃຫຍ່ LXML ທ່ານ ພໍ ແຮຣິສ ໄດ້ລາຍງານກ່ຽວກັບແຜນການຍືດອາຍຸບໍ່ແຮ່ເຊໂປນ ດ້ວຍການເລັ່ງຂະຫຍາຍວຽກງານສຳຫຼວດ ແລະ ລົງທຶນມະຫາສານໃສ່ໂຮງງານ ແລະ ອຸປະກອນໃໝ່ໆ.

ໂດຍການເປັນປະທານຮ່ວມຂອງ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ທ່ານ ທອງພັດ ອິນທະວົງ ແລະ ຮອງເຈົ້າແຂວງສະຫວັນນະເຂດ ທ່ານ ວຽງທະວິສອນ ເທບພະຈັນ, ກອງປະຊຸມຄັ້ງນີ້ ມີການເຂົ້າຮ່ວມຈາກຂະແໜງການພາກລັດທີ່ກ່ຽວຂ້ອງ ລວມທັງ ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ພ້ອມຜູ້ຕາງໜ້າຈາກຊຸມຊົນ ແລະ ອົງການຂັ້ນຮາກຖານ. LXML ຈັດກອງປະຊຸມກັບຜູ້ມີສ່ວນຮ່ວມເປັນປະຈຳແຕ່ ກໍໄດ້ຖືກໂຈະຊົ່ວຄາວ ຍ້ອນ ມາດຕະການຈຳກັດການລະບາດພະຍາດ COVID-19.

ຜູ້ເຂົ້າຮ່ວມກອງປະຊຸມໄດ້ປຶກສາຫາລືກ່ຽວກັບຜົນການປະຕິບັດງານດ້ານຄວາມປອດໄພ ແລະ ສິ່ງແວດລ້ອມ, ສິ່ງທ້າທາຍໃນການປະຕິບັດງານໃນໄລຍະວິກິດການ COVID-19, ຜົນປະໂຫຍດດ້ານເສດຖະກິດ ໃຫ້ແກ່ ສປປ ລາວ, ໂຄງລ່າງພື້ນຖານ, ການຝຶກອົບຮົມ ແລະ ພັດທະນາບຸກຄະລະກອນ, ແຜນການປິດບໍ່ ແລະ ການພັດທະນາຊຸມຊົນ. ຍ້ອນການສະໜັບສະໜູນຈາກ ພະແນກສາທາລະນະສຸກແຂວງສະຫວັນນະເຂດ, LXML ຈຶ່ງສາມາດ ສັກວັກຊີນຄົບໂດສ ໃຫ້ແກ່ 99% ໃນພະນັກງານທັງໝົດ 5.000 ຄົນ ແລະ ໄດ້ເລີ່ມສັກເຂັມທີ 3 ໃນເດືອນທັນວາ 2021. LXML ໄດ້ວາງມາດຕະການປ້ອງກັນຢ່າງເຂັ້ມງວດ ລວມທັງ ການກັກບໍລິເວນ ແລະ ການກວດຫາເຊື້ອໃຫ້ແກ່ພະນັກງານ ເປັນຕົ້ນ, ພ້ອມທັງ ເລັ່ງໃສ່ສັກວັກຊີນໃຫ້ແກ່ພະນັກງານ ແລະ ຜູ້ຮັບເໝົາທຸກຄົນ ເພື່ອປ້ອງກັນການແຜ່ລະບາດຂອງພະຍາດ COVID-19 ແລະ ປົກປ້ອງພະນັກງານ, ຄອບຄົວ ແລະ ຊຸມຊົນ.

**ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່** ໄດ້ກ່າວວ່າ: "ໂຄງການຂຸດຄົ້ນ-ຜະລິດຄຳ-ທອງເຊໂປນ ໄດ້ປະເຊີນຄວາມທ້າທາຍຫຼາຍປະການ, ແຕ່ພວກເຮົາໝັ້ນໃຈວ່າ ຈະສາມາດຜ່ານຜ່າໄດ້ ດ້ວຍການສະໜັບສະໜູນຢ່າງສະເໝີຕົ້ນສະເໝີປາຍຂອງຜູ້ມີສ່ວນຮ່ວມ."

ຕັ້ງແຕ່ເລີ່ມດຳເນີນງານໃນປີ 2003, LXML ໄດ້ປະກອບສ່ວນ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ, ຄ່າຊັບພະຍາກອນແຮ່ທາດ ແລະ ເງິນປັນຜົນ. ນອກຈາກນັ້ນ ຍັງໄດ້ປະກອບສ່ວນຜົນປະໂຫຍດທາງອ້ອມຫຼາຍຮ້ອຍລ້ານໂດລາສະຫະລັດ ຜ່ານການຈັດຊື້ສິນຄ້າ-ການບໍລິການທ້ອງຖິ່ນ, ການພັດທະນາທຸລະກິດ ແລະ ຊຸມຊົນ. ບໍ່ຄຳ-ທອງເຊໂປນ ໄດ້ກັບມາສູ່ຍຸກແຫ່ງການເຕີບໂຕຄືນໃໝ່ ຍ້ອນການລົງທຶນຂອງ ບໍລິສັດ ຊີເຟິງ ເພື່ອໃຫ້ບັນລຸຜົນປະໂຫຍດຈາກ ທ່າແຮງຂອງປະລິມານແຮ່ຄຳທຳມະຊາດ ແລະ ແຮ່ອື່ນໆໃນ ສປປ ລາວ.

# LXML ມອບ ວັດຖຸບູຮານ ທີ່ໄດ້ຄົ້ນພົບ ໃຫ້ແກ່ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ




**4 ກຸມພາ 2022** - ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງ ເຊໂປນ ໄດ້ມອບວັດຖຸບູຮານ 281 ລາຍການໃຫ້ແກ່ ກະຊວງ ຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ (ຖວທ). ພິທີມອບ-ຮັບດັ່ງກ່າວ ເປັນການສະເຫຼີມສະຫຼອງ ຜົນງານອັນພົ້ນເດັ່ນຂອງ LXML ໃນການສະໜັບສະໜູນ ການຄົ້ນຄວ້າບູຮານວິທະຍາ ແລະ ການປົກປັກຮັກສາມໍລະດົກວັດທະນະທຳຂອງ ສປປ ລາວ. ວັດຖຸທີ່ຄົ້ນພົບໃນເຂດບໍ່ຄຳ-ທອງເຊໂປນ ແລະ ຖືກມອບໃນຄັ້ງນີ້ປະກອບ ດ້ວຍ: ຫີນ, ທອງ, ເຫຼັກ, ເຄື່ອງປັ້ນດິນເຜົາ, ເບົ້າຫຼອມ ແລະ ແກ້ວ.

ນັບຕັ້ງແຕ່ປີ 2008 ເປັນຕົ້ນມາ, LXML ໄດ້ລົງທຶນກວ່າ US$1,6 ລ້ານ ເຂົ້າໃສ່ການສະໜັບສະໜູນໃຫ້ແກ່ການອະນຸລັກມໍລະດົກທາງປະຫວັດສາດ ແລະ ວັດທະນະທຳລາວ ທີ່ມີດົນກວ່າ 3.000 ປີ ໂດຍຜ່ານການຮ່ວມມືກັບ ກົມມໍລະດົກ ຖວທ, ມະຫາວິທະຍາໄລແຫ່ງຊາດລາວ ແລະ ມະຫາວິທະຍາໄລເຈມສ໌ຄຸກ ຂອງປະເທດອົດສະຕຣາລີ. ການຮ່ວມມືດັ່ງກ່າວ ໄດ້ສະໜັບສະໜູນວຽກງານພາກສະໜາມ ທີ່ມີລັກສະນະພິເສດໃນລະດັບຊຸມຊົນທ້ອງຖິ່ນ, ລະດັບປະເທດ ແລະ ສາກົນ ເຊິ່ງໄດ້ມີອາສາສະໝັກທີ່ເປັນນັກສຶກສາຈາກນະຄອນຫຼວງວຽງຈັນ, ຊຸມຊົນທ້ອງຖິ່ນ, ປະເທດອົດສະຕຣາລີ, ນັກບູຮານຄະດີ, ແລະ ເຈົ້າໜ້າທີ່ຈາກກົມມໍລະດົກປະຈຳຢູ່ບໍ່ຄຳ-ທອງ ເຊໂປນ ໄດ້ຮ່ວມມືກັນຢ່າງໃກ້ຊິດ ໃນວຽກງານສຶກສາ-ຄົ້ນຄວ້າບູຮານວິທະຍາ ແລະ ເຜີຍແຜ່ຜົນການຄົ້ນຄວ້າສູ່ເວທີສາກົນ.

ທ່ານນາງ ສວນສະຫວັນ ວິຍະເກດ, ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແລະ ທ່ານນາງ ຫຼີງທອງ ແສງຕາວັນ, ຮອງເຈົ້າແຂວງສະຫວັນນະເຂດ ໄດ້ໃຫ້ກຽດເຂົ້າຮ່ວມພິທີມອບ-ຮັບ ວັດຖຸບູຮານອັນສຳຄັນຄັ້ງນີ້ ທີ່ເມືອງວິລະບູລີ, ແຂວງສະຫວັນນະເຂດ ໂດຍໄດ້ຮັບຮູ້ ແລະ ຍ້ອງຍໍຊົມເຊີຍບໍລິສັດ ໃນການສະໜັບສະໜູນ ທີ່ມີມາຢ່າງຍາວນານໃນການປົກປັກຮັກສາມໍລະດົກວັດທະນະທຳ ແລະ ເຫັນໄດ້ຄວາມສຳຄັນໃນການສືບຕໍ່ປົກປັກຮັກສາສະຖານທີ່ວັດທະນະທຳເພື່ອສົ່ງເສີມການທ່ອງທ່ຽວຢູ່ໃນ ສປປ ລາວ.

ທ່ານ ສະໝານ ອະເນກາ - ຜູ້ອຳນວຍການໃຫຍ່ ໄດ້ມອບວັດຖຸບູຮານດັ່ງກ່າວ ໃຫ້ແກ່ ທ່ານນາງ ວັນເພັງ ແກ້ວປັນຍາ - ຜູ້ອຳນວຍການຫໍພິພິດທະພັນແຫ່ງຊາດ; ທ່ານ ນາລາທິເວດ ອຳມະລາທິທາດາ - ຜູ້ອຳນວຍການຫໍພິພິດທະພັນແຂວງສະຫວັນນະເຂດ; ແລະ ທ່ານນາງ ກັນທາ ໄຊຍະສານ - ຫົວໜ້າຫໍວັດທະນະທຳເມືອງວິລະບູລີ ໂດຍການເຂົ້າຮ່ວມຂອງ ທ່ານ ຄຳຜຸຍ ສີບຸນເຮືອງ, ເຈົ້າເມືອງວິລະບູລີ ແລະ ທ່ານ ພໍ ແຮຣິສ໌, ຜູ້ຈັດການໃຫຍ່ LXML.

ວັດຖຸບູຮານ ທີ່ໄດ້ມອບ-ຮັບໃນຄັ້ງນີ້ ຈະໄດ້ນຳໄປວາງສະແດງຢູ່ທີ່ ຫໍພິພິດທະພັນແຫ່ງຊາດ (ຈຳນວນ 130 ລາຍການ), ຫໍພິພິດທະພັນແຂວງສະຫວັນນະເຂດ (ຈຳນວນ 68 ລາຍການ) ແລະ ຫໍວັດທະນະທຳເມືອງວິລະບູລີ (83 ລາຍການ) ເພື່ອເປັນຮ່ອງຮອຍສຳຄັນໃນການສຶກສາຄົ້ນຄ້ວາ ແລະ ຮັບຊົມສຳລັບລູກຫຼານ, ປະຊາກອນ ແລະ ນັກທ່ອງທ່ຽວຕ່າງປະເທດ. LXML ໄດ້ມອບວັດຖຸບູຮານທັງໝົດ 7.881 ລາຍການ ໃຫ້ແກ່ລັດຖະບານລາວເກັບຮັກສາ ໃນປີ 2019.

**ທ່ານນາງ ສວນສະຫວັນ ວິຍະເກດ, ລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ** ໄດ້ກ່າວວ່າ: "ຂ້າພະເຈົ້າມີຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ LXML ຍັງສືບຕໍ່ສະໜັບສະໜູນ ການຄົ້ນຄວ້າບູຮານວິທະຍາ ແລະ ການປົກປັກຮັກສາມໍລະດົກວັດທະນະທຳຂອງ ສປປ ລາວ. ວັດຖຸບູຮານທີ່ມອບໃນມື້ນີ້ ຈະຖືກນຳໄປວາງສະແດງເພື່ອໃຫ້ທຸກຄົນຊື່ນຊົມ ກໍຄື ເພື່ອສົ່ງເສີມການສຶກສາຄົ້ນຄວ້າ ແລະ ຄວາມຮູ້ດ້ານປະຫວັດສາດ."

**ທ່ານ ພໍ ແຮຣິສ໌, ຜູ້ຈັດການໃຫຍ່ LXML** ໄດ້ກ່າວວ່າ: "LXML ມີຄວາມພາກພູມໃຈໃນການສະໜັບສະໜູນກົມມໍລະດົກ. ວັດຖຸບູຮານ ໄດ້ເປີດຮ່ອງຮອຍສູ່ຄວາມສີວິໄລໃນຍຸກສະໄໝບູຮານເພື່ອສະແດງໃຫ້ພວກເຮົາເຫັນວ່າ ບັນພະບູລຸດຂອງພວກເຮົາໄດ້ມີຊີວິດຢູ່ແນວໃດໃນຫຼາຍພັນປີກ່ອນໜ້ານີ້. ຫໍວັດທະນະທຳເມືອງວິລະບູລີເປັນອີກທາງເລືອກໜຶ່ງສຳລັບນັກທ່ອງທ່ຽວທີ່ຈະເດີນທາງມາທ່ອງທ່ຽວພາຍໃນ ສປປ ລາວ."

ຜ່ານມາໄດ້ມີການຄົ້ນພົບວັດຖຸບູຮານ ແລະ ສະຖານທີ່ມໍລະກົດທີ່ສຳຄັນ ຢູ່ໃນຂົງເຂດອ້ອມຂ້າງບໍ່ຄຳ-ທອງເຊໂປນຄື ໃນເດືອນມີນາ 2018, ຄະນະບູຮານວິທະຍາ ໄດ້ຄົ້ນພົບໄມ້ຄຳ-ກັນພັງຢູ່ໃນຂຸມສ້າງບໍ່ແຮ່ທອງໃນສະໄໝບູຮານຫຼາຍກວ່າ 200 ຂຸມບໍ່ ທີ່ມີອາຍຸຫຼາຍກວ່າ 3 000 ປີກ່ອນໜ້ານີ້.

ເມືອງວິລະບູລີ ຖືກຮັບຮູ້ໃນລະດັບສາກົນວ່າ ເປັນໜຶ່ງໃນເຂດທຳອິດທີ່ມີການຂຸດຄົ້ນບໍ່ແຮ່ ແລະ ສະຖານທີ່ໂລຫະກິດ ຢູ່ ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້. ການຂຸດຄົ້ນ-ປຸງແຕ່ງແຮ່ທາດໃນສະໄໝບູຮານຢູ່ໃນຂົງເຂດນີ້ ແມ່ນໄດ້ສືບຕໍ່ປະຕິບັດກັນມາຈົນເຖິງປະມານ 1 300 ປີກ່ອນ (ຄສ 700) ເຊິ່ງເປັນໄລຍະທີ່ ຜູ້ຄົນໄດ້ຂຸດຄົ້ນ-ຫຼໍ່ຫຼອມແຮ່ທອງທີ່ອຸດົມສົມບູນຢູ່ໃນຈຸດ 'ເປີນເບົ້າຫຼໍ່' ແລະ ຢູ່ທີ່ 'ທົ່ງນາເຖືອກ' ແລ້ວບຸກຄົນໄດ້ນຳໄປແລກປ່ຽນ-ຊື້ຂາຍກັນຕໍ່ໄປ ເຊິ່ງ ອັນນີ້ສະແດງໃຫ້ເຫັນ ແລວທາງການຄ້າຂາຍພາກພື້ນທີ່ມັ່ງຄັ່ງຮັ່ງມີ ໃນຫຼາຍສັດຕະວັດກ່ອນ.

ວັດຖຸບູຮານອື່ນໆທີ່ຄົ້ນຄົບໃນບໍລິເວນນີ້ ແມ່ນລວມມີອຸປະກອນນຳໃຊ້ໃນການຂຸດຄົ້ນແຮ່ ເຊັ່ນ: ຂັ້ນໄດໄມ້ກົມ ແລະ ລູກໝາກລໍ້-ລອກ, ໄມ້ຄໍ້າ, ກະຕ່າໄມ້ໄຜ່ ແລະ ເຊືອກຫວາຍ; ຄ້ອງບ້າງທອງສຳລິດ (ທອງເຫຼືອງ) ຈາກຍຸກທອງເຫຼືອງ ເຊິ່ງວາງສະແດງໄວ້ຢູ່ທີ່ຫໍພິພິດທະພັນແຫ່ງຊາດໃນປັດຈຸບັນ; ກ້ອນທອງ, ເຄື່ອງປັ້ນດິນເຜົາ, ກະດິງທອງສຳລິດ, ເຄື່ອງປະດັບ, ເຄື່ອງໃຊ້ໃນພິທີກຳເສັ່ນໄຫວ້ ແລະ ວັດຖຸບູຮານອື່ນໆ ເຊິ່ງຊີ້ໃຫ້ເຫັນວ່າ ປະເທດລາວໃນອະດີດ ເປັນສະຖານທີ່ປະຫວັດສາດທີ່ສຳຄັນຍິ່ງໃນພາກພື້ນແຫ່ງນີ້.

ບໍ່ແຮ່ໄດ້ເປັນປັດໃຈອັນສຳຄັນໃນການພັດທະນາຊຸມຊົນ ແລະ ສັງຄົມ ມາແຕ່ປະຫວັດສາດ. ການຂຸດຄົ້ນແມ່ນຍັງຈະດຳເນີນຕໍ່ໄປ ແລະ ພວກເຮົາຫວັງວ່າຈະໄດ້ເຜີຍແຜ່ການຄົ້ນພົບ ທີ່ໜ້າຕື່ນເຕັ້ນກວ່າເກົ່າ ທາງດ້ານມໍລະດົກວັດທະນະທຳ ແລະ ປະຫວັດສາດລາວ ໃນອະນາຄົດຕໍ່ໆໄປ.







# ຄົ້ນພົບວັດຖຸບູຮານ ອາຍຸ 2000 ປີ ຢູ່ບໍ່ຄຳ-ທອງ ເຊໂປນ

ໃນເດືອນກໍລະກົດ 2021, LXML ໄດ້ຄົ້ນພົບວັດຖຸບູຮານຈຳນວນໜຶ່ງທີ່ມີອາຍຸເກົ່າແກ່ 2.000 ປີ ພາຍໃນຂົງເຂດຂອງບໍ່ຄຳ-ທອງເຊໂປນ. ວັດຖຸບູຮານທີ່ຄົ້ນພົບລວມມີ ຂວານເຫຼັກ ແລະ ໄຫຂະໜາດໃຫຍ່ທີ່ໃຊ້ເຂົ້າໃນພິທີກຳການຝັງສົບໃນໄລຍະຂ້າມຜ່ານຈາກທ້າຍຍຸກທອງຕົ້ນຍຸກເຫຼັກ.

ໃນປີ 2008 ກໍໄດ້ຄົ້ນພົບໄຫທີ່ຄ້າຍຄືໄຫຂະໜາດໃຫຍ່ດັ່ງກ່າວ ຢູ່ເຂດທົ່ງນາເຖືອກ ເຊິ່ງ ໄດ້ຖືກສະເໜີເປັນ ສະຖານທີ່ມໍລະດົກຂອງແຂວງສະຫວັນນະເຂດ.

ນອກຈາກນັ້ນ, ທີມງານບູຮານວິທະຍາຂອງ LXML ຍັງໄດ້ຄົ້ນພົບໄຫເນື້ອແຂງເຊິ່ງໃນໄຫມີຂວານເຫຼັກ, ປອກແຂນທອງ ແລະ ໝາກປັດທີ່ເຮັດດ້ວຍເປືອກຫອຍ ແລະ ກ້າງປາ ທີ່ມີອາຍຸແຕ່ປະມານ ໄລຍະສະຕະວັດທີ 12; ພ້ອມເຄື່ອງມືທັນສະໄໝທີ່ສັນນິຖານໃນເບື້ອງຕົ້ນວ່າ ມາຈາກ ສະໄໝລ້ານຊ້າງລະຫວ່າງ ສະຕະວັດທີ 17 ເຖິງ 19.

ໃນໄລຍະຕົ້ນປີ 2021, LXML ຍັງໄດ້ຄົ້ນພົບວັດຖຸບູຮານອາຍຸເກົ່າແກ່ 6.000 ປີຈາກຍຸກຫີນຂັດ ຢູ່ໃກ້ບໍ່ຄຳ-ທອງເຊໂປນ.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ LXML** ໄດ້ກ່າວວ່າ: "ບໍລິສັດຂອງພວກເຮົາຍົກສູງ ການເຄົາລົບນັບຖືວັດທະນະທຳ ແລະ ຮີດຄອງປະເພນີຂອງຊຸມຊົນເຈົ້າພາບຂອງພວກເຮົາ. ຕັ້ງແຕ່ປີ 2008 ເປັນຕົ້ນມາ, LXML ໄດ້ລົງທຶນຫຼາຍກວ່າ US$1,6 ລ້ານ ເພື່ອສະໜັບສະໜູນ ການອະນຸລັກປະຫວັດສາດລາວ ແລະ ມໍລະດົກວັດທະນະທຳສຳລັບຄົນຮຸ່ນຕໍ່ໄປ."

# ຄົ້ນພົບວັດຖຸບູຮານ ຍຸກສະໄໝ ລ້ານຊ້າງ



ໃນໄລຍະແຕ່ເດືອນ ກັນຍາ ຫາ ຕຸລາ 2021, ທີມງານມໍລະດົກວັດທະນະທຳຂອງ LXML ໄດ້ຄົ້ນພົບວັດຖຸບູຮານຈຳນວນໜຶ່ງທີ່ມີອາຍຸຕັ້ງແຕ່ສັດຕະວັດທີ 18 ຫຼື ຍຸກລ້ານຊ້າງ. ການຄົ້ນພົບເຫຼົ່ານີ້ ເປັນການຢັ້ງຢືນອີກຄັ້ງວ່າ ບໍ່ຄຳ-ທອງເຊໂປນ ຕັ້ງຢູ່ທີ່ສະຖານໜຶ່ງທີ່ມີຄວາມໝາຍຄວາມສຳຄັນດ້ານປະຫວັດສານການຂຸດຄົ້ນບໍ່ແຮ່ໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້.

ໝໍ້ທອງ, ກ້ອນທອງ ແລະ ແຜ່ນທອງ ຄືບາງວັດຖຸບູຮານທີ່ຄົ້ນພົບໃນຫວ່າງບໍ່ດົນມານີ້. ລັກສະນະການຝັງນັ້ນເປັນການເຊື່ອງຊ້ອນໄວ້ເພື່ອເອົາມານຳໃຊ້ນຳຫຼັງ ແຕ່ບໍ່ແມ່ນການຝັງເພື່ອອຸທິດໃຫ້ແກ່ດວງວິນຍານ ຫຼື ພິທີກຳທາງສາດສະໜາອື່ນໆ, ເປັນຕົ້ນແມ່ນອຸທິດແກ່ຜູ້ທີ່ລ່ວງລັບ.

ມີ ໝໍ້ທອງ 4 ໜ່ວຍທີ່ຄົ້ນພົບຢູ່ບໍ່ດິສໂກເວີຣີ ແລະ ບໍ່ໄມ້ແດງ ເຊິ່ງ ມີອາຍຸລະຫວ່າງ 300 ຫາ 2000 ປີ ກໍຄື ຍຸກລ້ານຊ້າງ. ວັດຖຸເຫຼົ່ານີ້ ແມ່ນນຳໃຊ້ເຂົ້າໃນຊີວິດປະຈຳວັນ.

ມີແຜ່ນທອງອີກ 17 ແຜ່ນທີ່ຄົ້ນພົບຫ່າງຈາກ ປ່າຊ້າຜາວັດໄປທາງຕາເວັນຕົກປະມານ 500 ແມັດ ມີອາຍຸລະຫວ່າງ 2464-1309 ກ່ອນ. ແຜ່ນທອງເຫຼົ່ານີ້ຜະລິດຂຶ້ນເພື່ອເປັນວັດຖຸດິບໃນການແລກປ່ຽນຊື້-ຂາຍສິນຄ້າຂອງຄົນສະໄໝນັ້ນ ຫຼື ໃຊ້ເພື່ອແທນເງິນ ດັ່ງເງິນທີ່ພວກເຮົາທຸກຄົນໃຊ້ໃນປັດຈຸບັນ. ໃນຂະນະທີ່ຄຳ ແລະ ໂລຫະເງິນນັ້ນອາດເປັນສິ່ງທີ່ຜູ້ຮັ່ງມີ ແລະ ມີອຳນາດເທົ່ານັ້ນທີ່ເຂົ້າຫາໄດ້ ແລະ ມີຢ່າງຫຼວງຫຼາຍໃນຍຸກບູຮານ, ແຕ່ວ່າ ທອງເປັນ ໂລຫະສົດທີ່ຄົນທົ່ວໆໄປສາມາດຫາ-ໃຊ້ໄດ້ງ່າຍ.

ນັບແຕ່ປີ 2008 ເປັນຕົ້ນມາ, ບໍລິສັດ LXML ໄດ້ລົງທຶນກວ່າ US$1,6 ລ້ານ ເຂົ້າໃສ່ໃນການສະໜັບສະໜູນໃຫ້ແກ່ການອະນຸລັກມໍລະດົກທາງປະຫວັດສາດ ແລະ ວັດທະນະທຳ ທີ່ມີມາດົນກວ່າ 3.000 ປີ. ວຽກງານນີ້ຊ່ວຍໃຫ້ພວກເຮົາເຂົ້າໃຈກ່ຽວກັບວິຖີຊີວິດຂອງຄົນໃນອະດີດ ແລະ ຄວາມໝາຍຄວາມສຳຄັນຕໍ່ອະນາຄົດຂອງພວກເຮົາ.

ການຂຸດຄົ້ນບໍ່ແຮ່ໄດ້ເປັນປັດໃຈອັນສຳຄັນ ໃນການພັດທະນາຊຸມຊົນ ແລະ ສັງຄົມ ມາແຕ່ປະຫວັດສາດ.

ໃນຄະນະທີ່ການຂຸດຄົ້ນວັດຖຸບູຮານ ຍັງຈະດຳເນີນຕໍ່ໄປ, ພວກເຮົາຫວັງວ່າ ຈະໄດ້ມີການເຜີຍແຜ່ການຄົ້ນພົບ ທີ່ໜ້າຕື່ນເຕັ້ນກວ່າເກົ່າ ທາງດ້ານມໍລະດົກວັດທະນະທຳ ແລະ ປະຫວັດສາດລາວ ໄດ້ຕື່ມໄປອີກຕໍ່ໆໄປ.



# ສະຖານີ ຕິດຕາມ ການເໜັງຕີງ ຂອງຝາບໍ່

### ສະຖານີ Robotic Total Station (RTS) ແມ່ນຫຍັງ?

ສະຖານີ RTS ແມ່ນເຄື່ອງມືໃນການຕິດຕາມ ການເໜັງຕີງຂອງຝາບໍ່ ເພື່ອລະບຸການປ່ຽນແປງ ແລະ ຄວາມໝັ້ນຄົງຂອງຄວາມຊັນຂອງບໍ່. ສິ່ງນີ້ເປັນການແຈ້ງເຕືອນທີມງານວາງແຜນ ແລະ ດຳເນີນງານບໍ່ແຮ່ ລ່ວງໜ້າ ກ່ຽວກັບຄວາມສ່ຽງດ້ານທໍລະນີເຕັກນິກ ເພື່ອຮັບປະກັນໃນການນຳໃຊ້ມາດຕະການຄວບຄຸມ ແລະ ຍົກຍ້າຍພະນັກງານທີ່ເຮັດວຽກໃນເຂດດັ່ງກ່າວອອກຈາກເຂດທີ່ເປັນອັນຕະລາຍ.

ທີ່ພາກສະໜາມເຊໂປນ, ພວກເຮົາຕິດຕັ້ງສະຖານີ RTS ທັງໝົດ 5 ສະຖານີ ເພື່ອຮັບປະກັນທີມງານເຮັດວຽກດ້ວຍຄວາມປອດໄພ ແລະ ບັນລຸເປົ້າໝາຍການຜະລິດແຮ່. ຂໍ້ມູນຂອງ RTS ແມ່ນໄດ້ຮັບການຕິດຕາມ ແລະ ວິເຄາະລາຍວັນ ແລະ ສ້າງເປັນບົດລາຍງານ ໃຫ້ແກ່ທີມງານວາງແຜນ ແລະ ດຳເນີນງານບໍ່ແຮ່.



# ໂຄງການເຊໂປນນຳໃຊ້ເຄື່ອງຕິດຕາມການເໜັງຕີງຫຼັງຈາກການລະເບີດຫີນ

**ບົດຄວາມໂດຍ: ທ່ານ ຈອສ ກາບາໄຊ, ນັກທໍລະນີສາດອາວຸໂສ-ທີ່ປຶກສາເຕັກນິກດ້ານການຜະລິດ**

ທີ່ໂຄງການເຊໂປນ, ສ່ວນໜຶ່ງໃນຂະບວນການຄວບຄຸມຄຸນນະພາບແຮ່ ລວມມີການຕິດຕາມ ແລະ ເໜັງຕີງຂອງບ່ອກແຮ່ ພາຍຫຼັງການລະເບີດຫີນ ເພື່ອຫລຸດຜ່ອນການສູນເສຍແຮ່ (ເສຍແຮ່ໄປກັບຫີນເສດ), ການລະບຸແຮ່ທີ່ຜິດພາດ (ສົ່ງປະເພດແຮ່ໄປຜິດລານກອງແຮ່) ແລະ ການເຈືອຈາງ (ສົ່ງຫີນເສດໄປທີ່ໂຮງໂມ້).

ນັບຕັ້ງແຕ່ເດືອນພະຈິກ 2020, ໂຄງການເຊໂປນໄດ້ນຳໃຊ້ເຄື່ອງວັດແທກຕິດຕາມການເໜັງຕີງຫຼັງຈາກການລະເບີດຫີນ (BMMs) ເພື່ອຕິດຕາມການເໜັງຕີງຂອງການລະເບີດຫີນ - ຂະບວນການເພື່ອວັດແທກການເຄື່ອນທີ່ຂອງແຮ່ພາຍຫຼັງການລະເບີດ.

ມາຮອດປັດຈຸບັນນີ້, ຂະບວນການດັ່ງກ່າວສາມາດປະຢັດງົບປະມານໄດ້ຢ່າງໜ້ອຍ $165,000 ຈາກການໃຊ້ຈ່າຍທີ່ກ່ຽວຂ້ອງກັບການສູນເສຍແຮ່. ນອກຈາກນັ້ນຍັງສາມາດປະຢັດໄດ້ກວ່າ $188,000 ທີ່ກ່ຽວຂ້ອງກັບການເຈືອຈາງຂອງແຮ່ ດ້ວຍການນຳໃຊ້ລະບົບຕິດຕາມການເໜັງຕີງຫຼັງຈາກລະເບີດຫີນ.

**ວິທີການເຮັດວຽກມີຄືແນວໃດ?**
BMMs ແມ່ນໄດ້ຕິດຕັ້ງໃນຮູເຈາະທີ່ໄດ້ຮັບການອອກແບບມາເປັນພິເສດ ເພື່ອໃຫ້ຜູ້ຄວບຄຸມສາມາດເຂົ້າໃຈລັກສະນະການເໜັງຕີງຫຼັງຈາກການລະເບີດຫີນໃນຮູບແບບສາມມິຕິ. ໄດ້ມີການນຳໃຊ້ຊອບແວເຕັກໂນໂລຊີການເໜັງຕີງຫຼັງຈາກການລະເບີດ (BMT) ເພື່ອຕິດຕາມການເໜັງຕີງຫຼັງຈາກການລະເບີດ ແລະ ປະເມີນຜົນຂອງການລະເບີດກ່ອນຈະຕັ້ງຄ່າຂອບເຂດຂອງບ່ອກແຮ່ໃນບໍ່ສຳລັບການຂຸດຄົ້ນ. ນີ້ກໍ່ເພື່ອເປັນການຮັບປະກັນຄຸນນະພາບຂອງແຮ່ເຄົ້າ ທີ່ຂົນໄປລານກອງແຮ່ ແລະ ປ້ອນເຂົ້າສູ່ໂຮງງານຜະລິດ ເພື່ອເຮັດໃຫ້ໄດ້ຮັບແຮ່ທີ່ມີຄຸນນະພາບຕາມແຜນທີ່ວາງໄວ້ ແລະ ເຮັດໃຫ້ພວກເຮົາສາມາດບັນລຸເປົ້າໝາຍການຜະລິດທີ່ວາງໄວ້.

**ສິ່ງທີ່ທ້າທາຍມີຄືແນວໃດ?**
ເນື່ອງຈາກການແຜ່ລະບາດຂອງພະຍາດ COVID-19 ໄດ້ເຮັດໃຫ້ວິຊາການຂອງບໍລິສັດເຮຊາກອນ (Hexagon) ພົບຂໍ້ຫຍຸ້ງຍາກໃນການເດີນທາງ ໃນໄລຍະຈັດຕັ້ງປະຕິບັດໜ້າວຽກດັ່ງກ່າວທີ່ພາກສະໜາມເຊໂປນ ຊຶ່ງເປັນບໍ່ແຮ່ທຳອິດໃນອາຊີຕາເວັນອອກສ່ຽງໃຕ້ທີ່ນຳໃຊ້ເຕັກໂນໂລຊີດັ່ງກ່າວ ແລະ ເປັນໜຶ່ງໃນໂຄງການທຳອິດໃນໂລກທີ່ຈັດຕັ້ງປະຕິບັດລະບົບດັ່ງກ່າວຜ່ານລະບົບທາງໄກຈາກນອກສະຖານທີ່. ທີມງານຄວບຄຸມຄຸນນະພາບແຮ່, ພະແນກບໍລິການເຕັກນິກບໍ່ແຮ່ (MTS) ສາມາດຈັດຕັ້ງປະຕິບັດລະບົບດັ່ງກ່າວທີ່ພາກສະໜາມເຊໂປນໄດ້ຢ່າງເຕັມປະສິດທິພາບ ໂດຍຜ່ານການສະໜັບສະໜູນທາງອອນລາຍ ຈາກທີມງານເຮຊາກອນ ປະເທດອົດສະຕຣາລີ, ແລະ ການສະໜັບສະໜູນຈາກຄະນະຜູ້ບໍລິຫານໂຄງການເຊໂປນ, ພະແນກບໍລິການເຕັກນິກບໍ່ແຮ່, ແລະ ພະແນກຂຸດຄົ້ນແຮ່. ຂໍຊົມເຊີຍ!

**ແຜນການຕໍ່ໜ້າແມ່ນຫຍັງ?**
ຄາດຄະເນວ່າ ຈະເພີ່ມກຳລັງການຜະລິດແຮ່ເຄົ້າໃນປີ 2022, ພວກເຮົາຈະເຫັນການເພີ່ມຂຶ້ນຂອງການຕິດຕາມການເໜັງຕີງຫຼັງຈາກການລະເບີດຫີນໃນຫຼາຍໆ ບໍ່. ພະນັກງານໂຄງການເຊໂປນກໍ່ໄດ້ສຳເລັດຫຼັກສູດການຝຶກອົບຮົມໄລຍະ 2 ຂອງ BMT ແລະ ໄລຍະສຸດທ້າຍ ລວມທັງ ພາກປະຕິບັດຕົວຈິງ ແລະ ການນຳໃຊ້ຊອບແວ. ການຝຶກອົບຮົມໄດ້ສ້າງວິຊາການທີ່ເປັນພະນັກງານ 13 ຄົນທີ່ໂຄງການເຊໂປນ ຍິງ 1 ຄົນທີ່ມີຄຸນສົມບັດຄົບຖ້ວນໃນການນຳໃຊ້ຊອບແວ BMT ນີ້.

ເຮຊາກອນ ເປັນບໍລິສັດນຳໜ້າລະດັບໂລກໃນການແກ້ໄຂບັນຫາດ້ານດິຈິຕອນ ແລະ ເຮັດວຽກຮ່ວມກັບ LXML ໄດ້ເກືອບສອງປີແລ້ວ. ບໍລິສັດຊ່ຽວຊານດ້ານການປະສົມປະສານເຄື່ອງ ເຊັ່ນ ເຊັນເຊີກວດຈັບ, ຊອບແວ, ເຕັກໂນໂລຊີອິດສະລະ ດ້ວຍການປະສົມປະສານຂະບວນການເຮັດວຽກທີ່ສຳຄັນ.

# ທີມງານຊີເຈາະ ປັບປຸງຜົນການປະຕິບັດງານຢ່າງປອດໄພ ໂດຍບໍ່ຫວັ່ນລະດູຝົນ

ທີມງານຊີເຈາະຈາກພະແນກຂຸດຄົ້ນແຮ່ ໄດ້ຄົ້ນຄິດອອກແບບ "ເຕັກນິກການເຈາະແບບໃສ່ທໍ່" ອັນໃດປັບປຸງຜົນການປະຕິບັດງານການຊີເຈາະ.

ໂຄງສ້າງຫີນທີ່ສັບປົນ ແລະ ຄວາມດັນສູງຈາກໃຕ້ດິນ ບວກກັບ ນ້ຳເທິງໜ້າດິນ ໃນລະດູຝົນ ໄດ້ສ້າງຄວາມທ້າທາຍໃຫ້ແກ່ວຽກງານຊີເຈາະ. ວິທີການ ແລະ ເຕັກນິກທີ່ປະຕິບັດໃນເມື່ອກ່ອນ ໄດ້ເຮັດໃຫ້ຄຸນນະພາບການເຮັດວຽກຕ່ຳ ແລະ ເສຍເວລາກັບການຕ້ອງຊີເຈາະຮອບໃໝ່ຄືນ ເຊິ່ງມີຜົນຕໍ່ຄ່າໃຊ້ຈ່າຍຕ່າງໆ ກໍຄື ຄວາມອັນຕະລາຍຈາກຫີນພັງທີ່ມີຜົນກະທົບຕໍ່ຊຸມຊົນ.



"ເຕັກນິກການເຈາະແບບໃສ່ທໍ່" ຖືວ່າເປັນນະວັດຕະກຳໃໝ່ ໂດຍທີມງານຊີເຈາະຂອງພວກເຮົາ ທີ່ໄດ້ປັບປຸງຄຸນນະພາບການເຮັດວຽກເປັນຕົ້ນ: ຮູລະເບີດຫີນຈະເລິກກວ່າເກົ່າ ແລະ ສອດຄ່ອງກັບມາດຕະຖານດ້ານຄຸນນະພາບ, ການຫລຸດຜ່ອນຫີນພັງ ແລະ ຫລຸດຜ່ອນຄວາມຈຳເປັນໃນການລະເບີນຫີນຄືນໃໝ່.

**ທ່ານ ແສງເດືອນ ແຊ້ກວ້ັຍ, ຫົວໜ້າສາຍງານ ຊີເຈາະ ແລະ ລະເບີດຫີນ** ໄດ້ກ່າວວ່າ: "ຫົວໜ້າຄຸມງານການຊີເຈາະໄດ້ຝຶກອົບຮົມວິຊາການຊີເຈາະຂອງ LXML ແລະ ຜູ້ຮັບເໝົາ ຈຳນວນ 42 ຄົນ ກ່ຽວກັບເຕັກນິກໃໝ່ນີ້, ໂດຍສະເພາະໃນເຂດທີ່ມີນ້ຳຂັງຫຼາຍ."

"ພວກເຮົາມີຄວາມພາກພູມໃຈທີ່ສາມາດຄົ້ນຄິດເຕັກນິກໃໝ່ນີ້ ເຊິ່ງ ປອດໄພກວ່າເກົ່າ ແລະ ມີປະສິດທິພາບ ກໍຄື ປະສິດທິຜົນກວ່າເກົ່າ."

ເພື່ອບັນລຸເປົ້າໝາຍການຜະລິດຄຳໃຫ້ໄດ້ 7 ໂຕນໃນປີ 2022, ພວກເຮົາກໍ່ຕ້ອງຂຸດຄົ້ນຫຼາຍຂຶ້ນ ແລະ ການຊີເຈາະ ແລະ ລະເບີດຫີນ ກໍເປັນສ່ວນໜຶ່ງທີ່ສຳຄັນຂອງຂະບວນການນີ້.



## ສັງລວມຂ່າວ

15 ມິຖຸນາ 2021 – ປະທານສະພາແຫ່ງຊາດ ພະນະທ່ານ ດຣ ໄຊສົມພອນ ພົມວິຫານໄດ້ເຂົ້າຮ່ວມພິທີອັນເຊີນຮູບຫຼໍ່ເຄິ່ງຄີງປະທານ ໄກສອນ ພົມວິຫານ ທັງເປັນວິລະບູລຸດຂອງຊາດກໍຄືປວງຊົນລາວ ຂຶ້ນປະດິດສະຖານທີ່ອະນຸສອນ ທີ່ ເມືອງ ວິລະບູລີ ແຂວງສະຫວັນນະເຂດ. ອະນຸສອນສະຖານ-ຮູບຫຼໍ່ເຄິ່ງຄີງດັ່ງກ່າວ ແມ່ນໄດ້ຮັບການສະໜັບສະໜູນຈາກ ກອງທຶນພັດທະນາຊຸມຊົນຂອງ LXML ເຊິ່ງ ຍັງໄດ້ກໍ່ສ້າງຫໍວັດທະນະທຳເມືອງວິລະບູລີ ແນໃສ່ຊຸກຍູ້ການທ່ອງທ່ຽວໃນພາກພື້ນນຳອີກດ້ວຍ.



04 ສິງຫາ 2021 – ປະທານ ບໍລິສັດຊີເຟີງຂຸດຄົ້ນຄຳ ທ່ານ ຫວາງ ຈ້ຽນຫົວ ໄດ້ຢ້ຽມຄຳນັບ ຮອງປະທານສະພາແຫ່ງຊາດ ທ່ານ ສົມມາດ ພົນເສນາ ແລະ ຮອງລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ທ່ານ ທອງພັດ ອິນທະວົງ ເນື່ອງໃນໂອກາດທີ່ທ່ານມາຢ້ຽມຢາມ ສປປ ລາວ ຕັ້ງແຕ່ບໍລິສັດຊີເຟີງ ໄດ້ກ້າວມາເປັນຜູ້ຖືຮຸ້ນສ່ວນໃຫຍ່ໃນ LXML ໃນປີ 2018. ທ່ານ ຫວາງໄດ້ລາຍງານຄວາມຄືບໜ້າຂອງໂຄງການເຊໂປນພ້ອມທັງຢັ້ງຢືນແຜນການຂະຫຍາຍກິດຈະການໃນ ສປປ ລາວ.



23 ກຸມພາ 2022 – LXML ໄດ້ອຸປະຖຳ ແລະ ຮ່ວມ ເທດສະການວາງສະແດງຜະລິດຕະພັນລາວ ຢູ່ສູນການຄ້າລາວໄອເຕັກ. ທ່ານພັນຄຳ ວິພາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ (ຂວາ) ແລະ ດຣ ຄຳແພງ ໄຊສົມແພງ, ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ເຂົ້າຢ້ຽມຊົມ ຫ້ອງວາງສະແດງຂອງ LXML



# ຊົມເຊີຍພະນັກງານ LXML!




ໃນທຸກໆປີ, LXML ຈັດພິທີມອບໃບຍ້ອງຍໍກົງກັບ ວັນສະເຫຼີມສະຫຼອງວັນສະຖາປະຖາ ສປປ ລາວ ວັນທີ 2 ທັນວາ ເພື່ອຮັບຮູ້ ແລະ ຍ້ອງຍໍການປະກອບສ່ວນຂອງພະນັກງານຕໍ່ຜົນສຳເລັດຂອງ ໂຄງການຂຸດຄົ້ນ-ຜະລິດຄຳ-ທອງເຊໂປນ.

ໃນປີ 2021, ພວກເຮົາສະເຫຼີມສະຫຼອງພະນັກງານ 228 ທ່ານທີ່ໄດ້ເຮັດວຽກກັບບໍລິສັດມາໄດ້ຍາວນານແຕ່ 5 ເຖິງ 20 ປີ. ພະນັກງານທຸກຄົນທີ່ເຮັດວຽກຢູ່ບໍ່ຄຳ-ທອງເຊໂປນ ໄດ້ປະກອບສ່ວນເຮັດໃຫ້ເປັນໂຄງການທີ່ປະສົບຜົນສຳເລັດຈົນມາຮອດທຸກມື້ນີ້ ແລະ ພະນັກງານທຸກຄົນກໍ່ຄວນພາກພູມໃຈໃນຄວາມສຳເລັດນີ້.

ປີ 2021 ນີ້ຄົບຮອບ 28 ປີຕັ້ງແຕ່ການຕໍ່ຕັ້ງ ບໍລິສັດ LXML ບໍ່ຄຳ-ທອງເຊໂປນ ແລະ ເກືອບ 20 ປີຕັ້ງແຕ່ເລີ່ມການດຳເນີນງານ ຂຸດຄົ້ນ-ຜະລິດຄຳ-ທອງເຊໂປນ. ມີພະນັກງານ ແລະ ຜູ້ຮັບເໝົາ 5.000 ຄົນທີ່ໄດ້ປະກອບສ່ວນຕໍ່ການເຕີບໂຕຂອງ ບໍລິສັດ LXML, ໄດ້ຮຽນຮູ້ຝຶກຝົນສີມືທັກສະວິຊາຊີບ ແລະ ສ້າງຊີວິດການເປັນຢູ່ທີ່ດີຂຶ້ນ.

95% ຂອງພະນັກງານ LXML ແມ່ນຄົນລາວ, 75% ແມ່ນຊຸມຊົນທ້ອງຖິ່ນ ແລະ ຫຼາຍກວ່າ 20% ແມ່ນແມ່ຍິງ. ໃນສອງ-ສາມທົດສະຫວັດຜ່ານມາ, LXML ໄດ້ລົງທຶນຫຼາຍລ້ານໂດລາສະຫະລັດເຂົ້າໃສ່ການພັດທະນາຊັບພະຍາກອນມະນຸດ ລວມທັງ ທຶນການສຶກສາ, ການລົງຝຶກງານກັບບໍລິສັດ ແລະ ການຝຶກອົບ ຮົມຕົວຈິງເວລາເຮັດວຽກ. LXML ສືບຕໍ່ສະໜັບສະໜູນຄວາມກ້າວໜ້າໃນອາຊີບການງານ ແລະ ຄວາມໝັ້ນຂອງພະນັກງານ ກໍຄືເພື່ອສ້າງວິຊາການມືອາຊີບຄົນລາວເພື່ອຜົນປະໂຫຍດຂອງ ສປປ ລາວ.

**ທ່ານນາງ ວິໄລລັກ ວົງພິດ, ຫົວໜ້າຄຸມງານ ບັນຊີລາຍຈ່າຍ** ໄດ້ກ່າວວ່າ: "ຂ້າພະເຈົ້າມີຄວາມພາກພູມໃຈທີ່ໄດ້ເປັນສ່ວນໜຶ່ງຂອງຄວາມສຳເລັດຕະຫຼອດໄລຍະ 20 ປີຜ່ານມາ. LXML ເປັນອົງກອນທີ່ສະແດງໃຫ້ເຫັນ ຄຸນທາດທີ່ດີ ລວມທັງການເອົາໃຈໃສ່ຕໍ່ຄວາມປອດໄພ, ຄວາມຊື່ສັດ ແລະ ການພັດທະນາບຸກຄະລາກອນ." ທ່ານນາງ ວິໄລລັກ ໄດ້ເຮັດວຽກນຳ LXML ພໍດີຄົບ 20 ປີ ໃນປີ 2021.

ນັບແຕ່ເລີ່ມດຳເນີນງານ, LXML ບໍ່ຄຳ-ທອງເຊໂປນໄດ້ປະກອບສ່ວນຫຼາຍກວ່າ US$1,6 ຕື້ ເປັນລາຍຮັບໂດຍກົງໃຫ້ແກ່ລັດຖະບານລາວ ຜ່ານການຈ່າຍພາສີອາກອນ ແລະ ຄ່າຊັບພະຍາກອນແຮ່ທາດ. ນອກນັ້ນ ກໍໄດ້ປະກອບສ່ວນຜົນປະໂຫຍດທາງອ້ອມ ຜ່ານການພັດທະນາຊຸມຊົນ, ສ້າງວຽກເຮັດງານທຳ ແລະ ການຝຶກອົບຮົມ-ສ້າງສີມືແຮງງານໃຫ້ແກ່ຄົນລາວ.

**ທ່ານ ພໍ ແຮຣິສ, ຜູ້ຈັດການໃຫຍ່ LXML** ໄດ້ກ່າວຕໍ່ຜູ້ໄດ້ຮັບໃບຍ້ອງຍໍ-ລາງວັນວ່າ: "ທັກສະ ແລະ ປະສົບການທີ່ພະນັກງານເກັບກ່ຽວໄດ້ໃນຊຸມປີຜ່ານມາແມ່ນມີຄຸນຄ່າຍິ່ງ. ທັກສະເຫຼົ່ານີ້ຈະເປັນ ຊັບສິນ-ມໍລະດົກຕິດໂຕພະນັກງານທຸກຄົນບໍ່ວ່າພວກເຂົາຈະໄປເຮັດວຽກຢູ່ແຫ່ງໃດໃນ ສປປ ລາວ ກໍຕາມ.

**ທ່ານ ພໍ ແຮຣິສ** ຍັງໄດ້ກ່າວຕື່ມວ່າ: "ພະນັກງານເປັນຊັບສິນອັນດັບໜຶ່ງຂອງພວກເຮົາ ແລະ ພວກເຂົາເປັນຜູ້ດຳເນີນຜົນການຜະລິດຢ່າງປອດໄພ ໂດຍປະຕິບັດຄຸນທາດຂອງບໍລິສັດໃນແຕ່ລະວັນ. ໃນສອງປີຜ່ານມາ, ພະນັກງານຂອງພວກເຮົາໄດ້ພົບພໍ້ຄວາມທ້າທາຍຫຼາຍສົມຄວນຈາກການລະບາດຂອງພະຍາດ COVID-19, ເຮັດໃຫ້ພວກເຂົາຢູ່ຫ່າງຈາກຄອບຄົວ ແລະ ຕ້ອງຈຳກັດບໍລິເວນ ກໍຄື ເຮັດວຽກຍຽນທີ່ຍາວຂຶ້ນ. ຂ້າພະເຈົ້າມີຄວາມພາກພູມໃຈຢ່າງສູງ ແລະ ຂອບໃຈພະນັກງານ ແລະ ຜູ້ຮັບເໝົາຂອງພວກເຮົາ 5.000 ກວ່າຄົນທີ່ໄດ້ປະກອບສ່ວນຕໍ່ຜົນສຳເລັດຂອງ ບໍລິສັດ."

ພິທີມອບໃບຍ້ອງຍໍການເຮັດວຽກມາຍາວນານ ແມ່ນໄດ້ຈັດໃນຂະໜາດນ້ອຍລົງ ເພື່ອປະຕິບັດສອດຄ່ອງກັບ ມາດຕະການປ້ອງກັນການລະບາດຂອງພະຍາດ COVID-19, ເປັນພິທີມອບໃນວົງແຄບໂດຍຜູ້ຈັດການແຕ່ລະພະແນກ ເພື່ອຫຼີກເວັ້ນການເຕົ້າໂຮມຄົນຈຳນວນຫຼາຍ.



# ບິນສູງ: ມາພົບກັບ ນັກບິນໂດຣນຂອງ LXML

ໂດຣນທັນສະໄໝທຳອິດຂອງໂລກ – ຫຼື ພາຫະນະທາງອາກາດທີ່ບໍ່ມີຄົນນັ່ງຂັບ – ໄດ້ຖືກສ້າງຂຶ້ນໃນປີ 1935 ເພື່ອຝຶກອົບຮົມນັກບິນ. ຕັ້ງແຕ່ນັ້ນມາ, ໂດຣນໄດ້ຖືກນຳໃຊ້ໃນຫຼາກຫຼາຍອຸດສາຫະກຳ ນັບແຕ່ ການທະຫານ, ກະສິກຳ, ການບັນເທີງ ຕະຫຼອດຮອດ ບໍ່ແຮ່.

ທີ່ LXML, ພວກເຮົານຳໃຊ້ ໂດຣນ ເພື່ອຊ່ວຍໃຫ້ພວກເຮົາບັນລຸເປົ້າໝາຍການຂຸດຄົ້ນບໍ່ແຮ່ ແລະ ທັງຮັກສາຄວາມປອດໄພຂອງພະນັກງານ ກໍຄື ຊຸມຊົນ. ໂດຣນເປັນເຄື່ອງມືດີເລີດເພື່ອບັນລຸວຽກງານການວາງແຜນການຂຸດຄົ້ນ, ດ້ານການດຳເນີນງານ, ດ້ານສິ່ງແວດລ້ອມ ແລະ ວຽກງານຊຸມຊົນ.

ໂດຣນ ຈະໃຫ້ພາບທີ່ກວ້າງໄກຈາກລະດັບສູງທາງອາກາດ ໃຫ້ພວກເຮົາເຫັນ ຮ່ອງຮອຍທີ່ຖືກລົບກວນ ແລະ ຊ່ວຍໃຫ້ພວກເຮົາເຂົ້າເຖິງເຂດຫ່າງໄກສອກຫຼີກ.

LXML ມີພະນັກງານ 24 ຄົນຈາກທີມງານ ຂຸດຄົ້ນບໍ່ແຮ່, ສິ່ງແວດລ້ອມ, ແລະ ພົວພັນກັບຊຸມຊົນ ເຊິ່ງໃນນັ້ນມີແມ່ຍິງ 3 ຄົນ ທີ່ສາມາດບິນໂດຣນເພື່ອຮັບໃຊ້ວຽກງານປະຈຳວັນຂອງພວກເຮົາ. ເຮົາມາພົບກັບ ກັບຕັນບິນໂດຣນ ຂອງ LXML ທັງ 3 ທ່ານ ພ້ອມທັກສະຂອງພວກເຂົາ.



**ຈັນທະວີ ອິນທະສຸກ, ວິສະວະກອນ ດ້ານການຂຸດເຈາະ ແລະ ລະເບີດຫີນ, ຈາກນະຄອນຫຼວງວຽງຈັນ,**

ຈັນທະວີ ເປັນແມ່ຍິງຜູ້ດຽວໃນສະມາຊິກ 5 ຄົນຂອງທີມງານຂຸດເຈາະ ແລະ ລະເບີດຫີນ. ລາວໄດ້ເລີ່ມເຮັດວຽກກັບ LXML ໃນເດືອນ ເມສາ 2020.

"ຂ້າພະເຈົ້າໄດ້ຝຶກບິນໂດຣນເປັນເວລາໜ 1 ອາທິດ ແລະ ບິນມາໄດ້ 1 ປີພໍດີ. ການບິນໂດຣນທີ່ທ້າທາຍເປັນພິເສດແມ່ນຕອນບິນໃນລະດູຝົນ, ການບິນຢູ່ເຂດພູສູງ ແລະ ເວລາສັນຍານຕັດລະຫວ່າງໂດຣນ ແລະ ເຄື່ອງຄວບຄຸມ!"

**ບຸນຕ້ອນ ສິດທິເດດ, ພະນັກງານໄກ່ເກ່ຍ ແລະ ມໍລະດົກວັດທະນະທຳ, ຈາກເມືອງວິລະບູລີ,**

ບຸນຕ້ອນ ເປັນແມ່ຍິງຜູ້ດຽວໃນສະມາຊິກ 4 ຄົນຂອງ ທີມງານພົວພັນກັບຊຸມຊົນທີ່ສາມາດບິນໂດຣນ.



"ຂ້າພະເຈົ້າໄດ້ຝຶກບິນໂດຣນເປັນເວລາ 1 ເດືອນ ແລະ ບິນມາໄດ້ 6 ເດືອນພໍດີ. ຂ້າພະເຈົ້າ ບິນໂດຣນເພື່ອໃຫ້ໄດ້ພາບຊັດເຈນ ຂອງພື້ນທີ່ໆ ອາດໄດ້ຮັບຜົນກະທົບຈາກໂຄງການຂອງພວກເຮົາ ເຊັ່ນ ໜອງປາ ແລະ ດິນນາຂອງຊຸມຊົນ. ຂ້າພະເຈົ້າຄິດວ່າ ສິ່ງທີ່ສຳຄັນຫຼາຍສຳລັບຜູ້ທີ່ບິນໂດຣນ ແມ່ນຕ້ອງມີສະມາທິສູງ ແລະ ມີໄຫວພິບວ່ອງໄວ ເວລາ ບິນໃນພື້ນທີ່ຫຍຸ້ງຍາກກັນດານ ເປັນຕົ້ນຢູ່ເຂດພູຄ້ອຍຊັນ."

**ບົວຜັນ ພຣົມອາສາ, ວິສະວະກອນ – ປັບປຸງການຂຸດຄົ້ນແຮ່, ຈາກນະຄອນຫຼວງວຽງຈັນ,**

ບົວຜັນ ເປັນແມ່ຍິງຜູ້ດຽວໃນສະມາຊິກ 5 ຄົນຂອງທີມງານຂຸດຄົ້ນບໍ່ແຮ່ ທີ່ສາມາດບິນໂດຣນ.



"ຂ້າພະເຈົ້າໄດ້ຝຶກບິນໂດຣນ ເປັນເວລາ 2 ອາທິດ ແລະ ໄດ້ເລີ່ມບິນໃນຕົ້ນເດືອນພຶດສະພາ 2021. ຂ້າພະເຈົ້າເຫັນວ່າເວລາທີ່ບິນໂດຣນທີ່ເໝາະສົມທີ່ສຸດແມ່ນຫລັງຈາກ 10 ໂມງເຊົ້າ ເມື່ອແສງພໍດີງາມ ແລະ ໃນເວລາທີ່ບໍ່ມີລົມ. ພະແນກຂອງພວກເຮົານຳໃຊ້ໂດຣນສຳລັບຫຼາຍໜ້າວຽກ ເປັນຕົ້ນເພື່ອກວດກາກິດຈະກຳຂຸດເຈາະ ແລະ ລະເບີດຫີນ, ເກັບພາບຄວາມຄືບໜ້າຂອງວຽກງານຂຸດຄົ້ນແຮ່ໃນແຕ່ລະບໍ່ ແລະ ໃນແຕ່ລະໄລຍະເວລາຂອງກິດຈະກຳການພັດທະນາ. ການບິນໂດຣນ ເຮັດໃຫ້ເຮົາເຫັນມູມມອງທີ່ດີໃນການດຳເນີນງານຂອງພວກເຮົາ ເພື່ອໃຫ້ໄດ້ມີຂໍ້ມູນເລິກເຊິ່ງຂຶ້ນຕື່ມ. ໂດຣນ ຈະໃຫ້ພາບທີ່ກວ້າງໄກຈາກຫຼາກຫຼາຍມູມ ທີ່ສາມາດຊ່ວຍໃຫ້ພວກເຮົາສາມາດວາງແຜນ ແລະ ຕັດສິນໃຈໄດ້ເລິກເຊິ່ງຮອບດ້ານຂຶ້ນ."

# ຄາດຕະກອນໃນເງົາມືດ

*ບົດບັນນາທິການປະກອບສ່ວນໂດຍ ທ່ານ ປາລິວັດ ອິນທະວົງ, ຫົວໜ້າສາຍງານ - ປະຕິບັດ ແລະ ບໍລິການໂຄງການ, LXML ເນື່ອງໃນໂອກາດ ວັນສາກົນແຫ່ງການປູກຈິດສຳນຶກກ່ຽວກັບລະເບີດຝັງດິນ ແລະ ການຊ່ວຍເຫຼືອເພື່ອແກ້ໄຂບັນຫາລະເບີດຝັງດິນ, ວັນທີ 4 ເມສາ 2022*

ໃນຂະນະທີ່ເຫດການເສຍຊີວິດຈາກ ອຸປະຕິເຫດທາງທ້ອງຖະໜົນ, ການສູບຢາ, ມະເຮັງ ແລະ ພະຍາດ COVID-19 ສືບຕໍ່ເປັນຂ່າວໃນສື່ຕ່າງໆ, ການເສຍຊີວິດ ແລະ ການບາດເຈັບຈາກ ອຸປະຕິເຫດລະເບີດບໍ່ທັນແຕກ (UXO) ກໍຍັງສືບຕໍ່ກະທົບຕໍ່ຊຸມຊົນຢ່າງຮ້າຍແຮງ ຢູ່ໃນ ສປປ ລາວ.

ໃນປີ 2021, ສປປ ລາວ ລາຍງານອຸປະຕິເຫດ UXO 31 ຄັ້ງ ໂດຍມີການບາດເຈັບ 44 ຄົນ ແລະ ເສຍຊີວິດ 11 ຄົນ.

ວຽກງານເກັບກູ້ລະເບີດບໍ່ທັນແຕກ ໃນ ສປປ ລາວ ໄດ້ມີຄວາມຫຼ້າຊ້າ ຍ້ອນການລະບາດຂອງພະຍາດ COVID-19 ອັນໄດ້ສົ່ງຜົນໃຫ້ມີຕົວເລກ ການບາດເຈັບສູງຂຶ້ນ ເມື່ອສົມທຽບໃສ່ປີກ່ອນ.

ໂດຍລວມ, ສປປ ລາວ ເປັນປະເທດທີ່ໄດ້ຮັບການຖິ້ມລະເບີດຕໍ່ຫົວຄົນ ທີ່ໜັກໜ່ວງທີ່ສຸດໃນໂລກ. ໃນລະຫວ່າງປີ 1964 ຫາ 1973 ແມ່ນມີການຖິ້ມລະເບີດຫຼາຍກວ່າ 2 ລ້ານໂຕນ ເຊິ່ງເທົ່າກັບຈຳນວນລູກບົມບີ້ຫຼາຍກວ່າ 270 ລ້ານໜ່ວຍ ທີ່ໄດ້ຖືກຖິ້ມລົງໃສ່ເທິງແຜ່ນດິນຂອງ ສປປ ລາວ. ໃນນັ້ນ ແມ່ນຍັງມີລູກລະເບີດບໍ່ທັນແຕກປະມານ 30% ແລະ ມີພຽງ 1% ທີ່ໄດ້ຖືກເກັບກູ້ ຫຼື ຖືກທຳລາຍແຕ່ປີ 1996 ເປັນຕົ້ນມາ. ຍ້ອນແນວນັ້ນ ສປປ ລາວ ຈຶ່ງໄດ້ມີເປົ້າໝາຍການພັດທະນາແບບຍືນຍົງທີ່ 18 (SDG 18) ສະເພາະຂອງປະເທດ ເຊິ່ງແນໃສ່ການເຮັດໃຫ້ປະຊາຊົນລາວ ມີ "ຊີວິດທີ່ປອດໄພຈາກລະເບີດບໍ່ທັນແຕກ".

ບໍ່ຄຳ-ທອງເຊໂປນ ຕັ້ງຢູ່ເມືອງວິລະບູລີ, ແຂວງສະຫວັນນະເຂດ ເຊິ່ງເປັນເມືອງໜຶ່ງ ທີ່ໄດ້ຖືກຖິ້ມລະເບີດ ລົງໃສ່ຫຼາຍທີ່ສຸດໃນປະເທດ. ຍ້ອນແນວນັ້ນ, ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXMl) ຈຶ່ງໄດ້ນຳເອົາ ວຽກງານເກັບກູ້ລະເບີດທີ່ຍັງບໍ່ທັນແຕກເຂົ້າມາເປັນວຽກໜຶ່ງທີ່ສຳຄັນໃນວົງຈອນການຂຸດຄົ້ນ-ປຸງແຕ່ງ-ຜະລິດບໍ່ແຮ່ ເພື່ອຮັບປະກັນໃຫ້ພະນັກງານ, ຊຸມຊົນ ແລະ ການດຳເນີນງານຂອງພວກເຮົາປອດໄພຈາກ ອຸປະຕິເຫດຈາກ UXO ທີ່ຍັງຫຼົງເຫຼືອຢູ່. LXML ມີທີມງານ UXO ທີ່ມີຄຸນວຸດທິໃນລະດັບສາກົນ ເປັນຜູ້ດຳເນີນງານກວດກູ້ລະເບີດບໍ່ທັນແຕກເຫຼົ່ານີ້ ເຊິ່ງນັບແຕ່ຂະບວນການສຳຫຼວດ, ກ່ອນການກໍ່ສ້າງ ແລະ ຂຸດຄົ້ນບໍ່ແຮ່ ຕະຫຼອດເຖິງການສະໜັບສະໜູນໂຄງການພັດທະນາຊຸມຊົນຂອງບໍລິສັດ. ນອກຈາກນັ້ນແລ້ວ ທາງບໍລິສັດກໍຍັງໄດ້ມີການປູກຈິດສຳນຶກ ໂດຍໄດ້ມີການເຜີຍແຜ່ຂໍ້ມູນຄວາມຄວາມຮູ້ກ່ຽວກັບ ຄວາມອັນຕະລາຍຂອງ UXO ຕໍ່ຊຸມຊົນເຈົ້າພາບ ແລະ ຊຸມຊົນທ້ອງຖິ່ນຂອງພວກເຮົາ ນຳອີກດ້ວຍ.

ຕະຫຼອດທົດສະຫວັດຜ່ານມາ, ກົດເຫຼັກຂອງທີມງານເກັບກູ້ລະເບີດຂອງພວກເຮົາແມ່ນ ຫ້າມມ້າງລູກລະເບີດ ຫຼື ເຄື່ອນຍ້າຍລູກລະເບີດໂດຍບໍ່ມີຄວາມຈຳເປັນ. ທຸກຄັ້ງທີ່ກວດພົບວັດຖຸລະເບີດທີ່ຍັງບໍ່ທັນແຕກແມ່ນຈະຕ້ອງມີການທຳລາຍລູກລະເບີດກັບທີ່. ທຸກຄົນພາຍໃນທີມງານແມ່ນເຂົ້າໃຈດີ ເຖິງຄວາມສ່ຽງສູງທີ່ຕິດພັນກັບວຽກງານຂອງພວກເຮົາ. ອຸປະຕິເຫດກໍເກີດຂຶ້ນໄດ້ທຸກເວລາ ຖ້າພວກເຮົາບໍ່ປະຕິບັດຕາມມາດຕະຖານເຕັກນິກສະເພາະທີ່ຖືກວາງອອກ. ຄວາມຜິດພາດໃດໆ ອາດໝາຍເຖິງການສູນເສຍຊີວິດ ແລະ ບໍ່ມີໂອກາດເປັນຄັ້ງທີສອງເພື່ອໃຫ້ກັບຄືນມາແກ້ໄຂໄດ້ອີກ. ສະນັ້ນພວກເຮົາຕ້ອງເອົາໃຈໃສ່ຝຶກຝົນຢ່າງດີ ແລະ ມີປະສົບການໃນການດຳເນີນງານທີ່ອັນຕະລາຍນີ້. ທີມງານ UXO ຂອງ LXML ໄດ້ບັນລຸການເຮັດວຽກເກັບກູ້ລະເບີດທີ່ປັດສະຈາກການບາດເຈັບມາໄດ້ 5 ປີຕິດຕໍ່ກັນ.

ນັບຕັ້ງແຕ່ປີ 1996, LXML ໄດ້ລົງທຶນສູງເຖິງ US$54 ລ້ານ ເຂົ້າໃນການເກັບກູລະເບີດທີ່ບໍ່ທັນແຕກ ແລະ ທຳລາຍລະເບີດກວ່າ 60.000 ໜ່ວຍ ເຊິ່ງ 90% ຂອງລະເບີດຈຳນວນນີ້ ແມ່ນພ້ອມທີ່ຈະລະເບີດ ຖ້າຫາກໄດ້ຮັບການກະທົບ. ໃນປີ 2021 ທີມງານພວກເຮົາໄດ້ທຳລາຍລູກລະເບີດຝັງດິນ 1.368 ໜ່ວຍ ແລະ ໄດ້ກວດກູ້ລະເບີດບໍ່ທັນແຕກໃນເນື້ອທີ່ຫຼາຍກວ່າ 7 ລ້ານ ກິໂລຕາແມັດ. ໃນຫວ່າງບໍ່ດົນມານີ້, LXML ໄດ້ລົງນາມບົດບັນທຶກຄວາມເຂົ້າໃຈກັບ ກະຊວງປ້ອງກັນຊາດ. ການຮ່ວມມື ທີ່ມີມາຍາວນານນີ້ ໄດ້ສະໜັບສະໜູນໃຫ້ແກ່ວຽກງານເກັບກູ້ UXO ຢູ່ອ້ອມຂ້າງບໍ່ຄຳ-ທອງເຊໂປນ ແລະ ຍົກລະດັບຄວາມອາດສາມາດດ້ານວິຊາການ ເພື່ອຜົນປະໂຫຍດຂອງຄົນຮຸ່ນຫຼັງ. ບໍລິສັດ ຈະສືບຕໍ່ຮ່ວມມືກັບ ກະຊວງປ້ອງກັນຊາດ ໃນການທົດສອບວິທີການ ແລະ ເຕັກໂນໂລຊີໃໝ່ໆໃນການເກັບກູ້ UXO.

ບໍລິສັດ LXML ຈະສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຊຸມຊົນທ້ອງຖິ່ນ ແລະ ເຈົ້າໜ້າທີ່ພາກລັດເພື່ອກວດຄົ້ນ ແລະ ທຳລາຍລະເບີດທີ່ບໍ່ທັນແຕກ ຢູ່ ອ້ອມຂ້າງບໍ່ຄຳ-ທອງເຊໂປນ ເພື່ອໃຫ້ທຸກຄົນປອດໄພຂຶ້ນ.





# ການສຳພາດ ເພື່ອນຕໍ່ເພື່ອນ




ໃນວັນທີ 31 ມີນາ 2022 ທີ່ກົງກັບເດືອນແມ່ຍິງສາກົນ, ຫົວໜ້າສາຍງານຝ່າຍຂາຍ ແລະ ການຕະຫຼາດ ທ່ານນາງ ດາລີວອນ ສຸດາຈັນ ໄດ້ມີການໂອ້ລົມສົດຜ່ານລາຍການສຳພາດ ເມດທູເມດ ຫຼື "ເພື່ອນຕໍ່ເພື່ອນ" ຂອງອອສແຊມ (AustCham). ໃນລາຍການຄັ້ງນີ້, ທ່ານນາງ ດາລີວອນ ໃນຖານະທີ່ເປັນແມ່ຍິງຄົນໜຶ່ງ ທີ່ເຮັດວຽກນຳບໍລິສັດ LXML ມາໄດ້ເກືອບ 20 ປີ, ກໍໄດ້ຍົກໃຫ້ເຫັນວ່າ LXML ສົ່ງເສີມ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງແນວໃດ ໃນອຸດສາຫະກຳທີ່ມີແຕ່ຜູ້ຊາຍເປັນສ່ວນໃຫຍ່ມາຕັ້ງແຕ່ໃດ ເຊັ່ນ ຂະແໜງບໍ່ແຮ່.

ທີ່ LXML, ຄຸນທາດຂອງພວກເຮົາຈະເປັນຕົວຊີ້ບອກວ່າພວກເຮົາປະຕິບັດຕໍ່ຜູ້ອື່ນແນວໃດ. ພວກເຮົາມີຄວາມມຸ່ງໝັ້ນໃນການສ້າງສະພາບແວດລ້ອມການເຮັດວຽກທີ່ມີຄວາມຫຼາກຫຼາຍ ແລະ ມີສ່ວນຮ່ວມ ເຊິ່ງ ພະນັກງານທຸກຄົນຖືກຍົກສູງຍ້ອນການປະກອບສ່ວນສະເພາະຂອງແຕ່ລະຄົນ. ທີ່ LXML, ພວກເຮົາຮັບຟັງທຸກໆຄວາມເຫັນ ແລະ ເຄົາລົບທຸກໆວັດທະນະທຳ ແລະ ພາສາ. ພວກເຮົາຮັບຮູ້ວ່າ ຄວາມຫຼາກຫຼາຍ ແລະ ການເຮັດວຽກຮ່ວມກັນຈະນຳທາງເຮົາສູ່ຄວາມກ້າວໜ້າ. ພວກເຮົາຮູ້ດີວ່າ ການຮ່ວມມື ແລະ ການປຶກສາຫາລືມີຄວາມສຳຄັນຕໍ່ຜົນສຳເລັດ.

LXML ໄດ້ພັດທະນາພະນັກງານທ້ອງຖິ່ນຢ່າງສຳເລັດຜົນ ໃນນັ້ນພະນັກງານຄົນລາວກວມເອົາ 95% ແລະ ແມ່ຍິງ 20% ຂອງ ພະນັກງານທັງໝົດ. ບໍລິສັດໄດ້ລົງທຶນຫຼາຍລ້ານໂດລາສະຫະລັດເຂົ້າໃສການພັດທະນາຊັບພະຍາກອນມະນຸດຕັ້ງແຕ່ປີ 2003 ເປັນຕົ້ນມາ. ບໍລິສັດຈະໃຫ້ບູລິມະສິດຄົນທ້ອງຖິ່ນເວລາຈັດຫາ-ຮັບເອົາພະນັກງານ ເຊິ່ງຈະຊ່ວຍຮັກສາການສະໜັບສະໜູນຂອງຊຸມຊົນທ້ອງຖິ່ນ ຕໍ່ກັບ ໂຄງການຂອງພວກເຮົາ. ນອກຈາກນັ້ນ, LXML ສະໜອງການຝຶກອົບຮົມ ລະ ການພັດທະນາພະນັກງານໃນຫຼາກຫຼາຍຂະແໜງອາຊີບ, ໃຫ້ທຶນການສຶກສາຢູ່ ອົສຕຣາລີ ແລະ ການຝຶກອົບຮົມໃນໜ້າວຽກ ເພື່ອກໍ່ສ້າງ ວິຊາການມືອາຊີບຄົນລາວ ຮຸ່ນຕໍ່ໄປ.



# ແມ່ຍິງໃນຂະແໜງຂຸດຄົ້ນບໍ່ແຮ່

*ໂດຍ: ທີມງານການດຳເນີນງານທີ່ດີເລີດດ້ານການຂຸດຄົ້ນບໍ່ແຮ່, LXML*




ການຖືອາຊີບເປັນວິສາວະກອນບໍ່ແມ່ນວ່າທຸກຄົນຈະເປັນໄດ້. ວິສະວະກຳ ຮຽກຮ້ອງໃຫ້ມີການອຸທິດເຫື່ອແຮງໃນການວິເຄາະທີ່ນຳໄປສູ່ການແກ້ໄຂບັນຫາ, ເຊິ່ງເວົ້າລວມເປັນຂະແໜງໜ້າວຽກທີ່ມີຄວາມທ້າທາຍຢູ່ແລ້ວ. ແຕ່ວ່າ, ແມ່ຍິງທີ່ເຮັດວຽກໃນຂະແໜງວິສະວະກຳ ແລະ ເວົ້າສະເພາະອຸດສາຫະກຳບໍ່ແຮ່ນີ້ ຍິ່ງ ພົບກັບຄວາມທ້າທາຍໄປຕື່ມອີກຄື: ການຈຳແນກ-ແນວຄິດຕາຍຕົວ ທີ່ຖ່ວງດຶງ ພວກເຮົາທຸກຄົນ.

ຄວາມຫຼາກຫຼາຍ ມີຄວາມສຳຄັນສຳລັບທຸກໆສັງຄົມ ແລະ ການໄດ້ເປັນສ່ວນໜຶ່ງຂອງ "ທີມງານການດຳເນີນງານທີ່ດີເລີດດ້ານການຂຸດຄົ້ນບໍ່ແຮ່" ກໍເປັນແຮງບັນດານໃຈໜຶ່ງໃນການເຮັດວຽກ ຍ້ອນວ່າ ທີມງານນີ້ ບໍ່ມີການຈຳແນກລະຫວ່າງ ແມ່ຍິງ ແລະ ຜູ້ຊາຍ. ພວກເຮົາມີໂອກາດໄດ້ພິສູດ ທ່າແຮງບົ່ມຊ້ອນ ແລະ ຄວາມສາມາດໃນບົດບາດໜ້າທີ່ ທີ່ໂດຍປົກກະຕິທົ່ວໄປ ຈະແມ່ນຜູ້ຊາຍເປັນຜູ້ຖື. ບົດບາດໜ້າທີ່ຂອງພວກເຮົາ ໃນໜ່ວຍງານ ການດຳເນີນງານຄວາມດີເລີດດ້ານການຂຸດຄົ້ນບໍ່ແຮ່ ໄດ້ໃຫ້ໂອກາດພວກເຮົານຳໃຊ້ຄວາມຮູ້ດ້ານເຕັກນິກເຂົ້າໃນໜ້າວຽກຈາກຜຽນໜຶ່ງສູ່ອີກຜຽນໜຶ່ງ ສືບເນື່ອງໄປທັງເວັນ ແລະ ຄືນ ຄຽງຄູ່ກັບ ໂອກາດໃຫ້ພວກເຮົາໄດ້ພັດທະນະຕົນເອງ ແລະ ທີມງານ.

ຂະແໜງການບໍ່ແຮ່ ເປັນວຽກທີ່ຍາກທ້າທາຍ ແຕ່ເຮັດແລ້ວ ກໍມ່ວນ ແລະ ມີຄວາມພາກພູມໃຈ. ມັນເປັນໜ້າວຽກທີ່ມີຄວາມຫຼາກຫຼາຍ ແລະ ມີຄວາມທ້າທາຍຢູ່ສະເໝີ. ພວກເຮົາເປັນສ່ວນໜຶ່ງຂອງທີມງານທີ່ເຮັດວຽກໃຫ້ປະກົດຜົນເປັນຈິງ ແລະ ມີໂອກາດຂັບເຄື່ອນຫຼາຍກວ່າການຜະລິດຄຳ-ທອງຄື: ພວກເຮົາສາ ມາດປະກອບສ່ວນຕໍ່ຜົນຮັບທີ່ສຳຄັນ ຜ່ານການເຮັດວຽດດ້ວຍຄວາມຂະຫຍັນພາກພຽນ, ການອຸທິດເຫື່ອແຮງ ແລະ ຄວາມມັກຮັກໃນໜ້າວຽກ. ສິ່ງເຫຼົ່ານີ້ລ້ວນແຕ່ເປັນແຮງຈູງໃຈ ແລະ ພະລະກຳລັງໃຫ້ພວກເຮົາມີຄວາມອົດທົນໃນແຕ່ລະວັນ.

ພວກເຮົາຊຸກຍູ້ໃຫ້ແມ່ຍິງລາວທຸກຄົນ ຈົ່ງເຂັ້ມແຂງ ແລະ ສານຕໍ່ຕາມຄວາມຝັນຂອງຕົນ ບໍ່ວ່າຈະມີສິ່ງທ້າ ທາຍ ຫຼື ການຈຳແນກ-ແນວຄິດຕາຍຕົວໃດໆ. ພວກເຮົາ, ແມ່ຍິງ, ຈະຜ່ານຜ່າທຸກໆບັນຫາ ແລະ ຄວາມຫຍຸ້ງຍາກທີ່ຜ່ານມາໃນຊີວິດພວກເຮົາ.

ໃນວັນແມ່ຍິງສາກົນປີນີ້, ພວກເຮົາຮ້ອງຂໍໃຫ້ເພື່ອນຮ່ວມງານແມ່ຍິງທຸກຄົນ ປ່ອຍປະ ການຈຳແນກ-ແນວຄິດຕາຍຕົວໄວ້ເບື້ອງຫຼັງ ແລະ ຊ່ວຍອູ້ມຊູສົ່ງເສີມກັນ ແລະ ກັນ ບໍ່ວ່າທ່ານຈະແມ່ນເພດໃດ. ພວກເຮົາຕ້ອງປ່ຽນແນວຄິດ: ອັນໃດທີ່ຜູ້ຊາຍເຮັດໄດ້ ແມ່ຍິງກໍເຮັດໄດ້ ໂດຍສະເພາະ ໃນຂະແໜງວິສະວະກຳ ແລະ ບໍ່ແຮ່ ເພາະພວກເຮົາບໍ່ແມ່ນວິສະວະກອນຍິງ, ແຕ່ພວກເຮົາແມ່ນ "ວິສະວະກອນ".



*ເພື່ອເປັນການສ້າງຂະບວນການຄຳນັບຮັບຕ້ອນວັນແມ່ຍິງສາກົນຄົບຮອບ 112 ປີ, ໃນວັນທີ 7 ມີນາ 2022 ທີ່ຜ່ານມາ, LXML ໄດ້ຈັດການແຂ່ງຂັນບານເຕະມິດຕະພາບຂຶ້ນທີ່ພາກສະໜາມເຊໂປນ ລະຫວ່າງ ທີມພະນັກງານຍິງ ແລະ ທີມການນຳ-ອາວຸໂສຂອງບໍລິສັດ. ຜົນປະກົດວ່າທີມຍິງ ແຂ່ງແກ່ນກວ່າ ສາມາດເອົາຊະນະທີມການນຳໄດ້ 2-1.*



# ໜ່ວຍຮັບມືເຫດສຸກເສີນຈາກ LXML ກອບກູ້ບຸກຄົນຂຸດຄົ້ນແຮ່ຜິດກົດໝາຍຢູ່ ແຂວງ ສະຫວັນນະເຂດ

*ຂຽນໂດຍ: ໂຣບິນ ແຮມິວຕັ້ນ-ໂຄດສ໌, ທີ່ປຶກສາອາວຸໂສ ຝ່າຍພົວພັນກັບຜູ້ມີສ່ວນຮ່ວມ, LXML.*

ທີມງານກູ້ໄພສຸກເສີນຈາກ ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ໄດ້ຮັບມືກັບອຸປະຕິເຫດຮ້າຍແຮງ ທີ່ມີ ປະຊາຊົນລັກລອບຂຸດແຮ່ທອງແບບພື້ນບ້ານໂດຍບໍ່ໄດ້ຮັບອະນຸຍາດ ຢູ່ ໃນເມືອງວິລະບູລີ ໃກ້ບໍ່ຄຳ-ທອງເຊໂປນ ແຂວງສະຫວັນນະເຂດ ໃນເວລາປະມານ 8:00 ໂມງແລງ ຂອງວັນທີ 31 ມັງກອນ 2022.

ມີຜູ້ຊາຍສອງຄົນ (ອາຍຸ 23 ແລະ 27 ປີ) ທີ່ຊອກຫາມາລາໄຄດ໌ (ທອງ ຫຼື "ຫີນຂຽວ") ທີ່ຕິດຢູ່ໃຕ້ດິນຫຼາຍແມັດໂດຍມີຫີນທັບ ໃນປ່ອງອຸໂມງທີ່ພວກກ່ຽວຂຸດດ້ວຍຕົນເອງ ຢູ່ ທາງຂ້າງຂອງພູໜ່ວຍໜຶ່ງ. ຜູ້ຊາຍອີກຈຳນວນໜຶ່ງແມ່ນໄດ້ປີນໜີເພື່ອໄປຮ້ອງຫາຄວາມຊ່ວຍເຫຼືອ.

ກຸ່ມຄົນທີ່ພາກັນເຂົ້າມາຂຸດຄົ້ນເອົາແຮ່ໂດຍລຳພັງ ແລະ ບັນດາຜູ້ຄ້າຂາຍແຮ່ທີ່ເຫັນແກ່ຜົນປະໂຫຍດສ່ວນຕົວ ແລະ ເປັນໜ້າລະອາຍຕໍ່ສັງຄົມ ສ່ວນໃຫຍ່ເປັນຜູ້ທີ່ຊຸກຍູ້ໃຫ້ສະມາຊິກຊຸມຊົນທີ່ບອບບາງ-ດ້ອຍໂອກາດ ລວມທັງເດັກນ້ອຍຊາວໜຸ່ມ ເພື່ອໃຫ້ພວກເຂົາເຈົ້າ ແບກຫາບຄວາມສ່ຽງຮ້າຍແຮງທີ່ສຸດເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກສິ່ງທີ່ເປັນອັນຕະລາຍ. ອຸປະຕິເຫດຄັ້ງນີ້ຊີ້ໃຫ້ພວກເຮົາເຫັນເຖິງ ຄວາມອັນຕະລາຍອັນຫຼາກຫຼາຍທີ່ຕິດພັນກັບການຂຸດຄົ້ນແຮ່ແບບຜິດກົດໝາຍ. ມີຫຼາຍຄົນທີ່ໄດ້ເສຍຊີວິດຈາກອຸປະຕິເຫດຄ້າຍຄືກັນນີ້ ຢູ່ໃນ ສປປ ລາວ ແລະ ປະເທດອື່ນໆອ້ອມຂ້າງ.

ຫຼັງຈາກພະຍາຍາມຂຸດເອົາພວກເຂົາອອກມາແຕ່ບໍ່ໄດ້ຮັບຜົນ, ຄອບຄົວຂອງຜູ້ຊາຍທັງສອງຄົນ ແລະ ນາຍບ້ານກໍໄດ້ຮ້ອງຂໍຄວາມຊ່ວຍເຫຼືອຈາກ LXML ເພື່ອກອບກູ້ເອົາຜູ້ຊາຍທັງສອງດັ່ງກ່າວ. LXML ໄດ້ແຈ້ງເຈົ້າໜ້າທີ່ຕຳຫຼວດ ແລະ ອຳນາດການປົກຄອງທ້ອງຖິ່ນທັນທີ. ສະຖານທີ່ເກີດເຫດກໍຖືວ່າ ຫ່າງໄກສອກຫຼີກ ແລະ ລຳບາກ ກາກກຳໃນການເຂົ້າເຖິງ, ພື້ນດິນກໍປຸກ, ບວກກັບຄວາມສ່ຽງທີ່ຈະເກີດຫີນເຈື່ອນ ແລະ ຝົນກໍໃກ້ເຂົ້າມາທ່າມກາງຄວາມມືດມົນນັ້ນ ແຕ່ພະນັກງານ LXML ຫຼາຍຮ້ອຍຄົນດ້ວຍອຸປະກອນພິເສດ ກໍຍັງຕັ້ງໜ້າຕັ້ງຕາບຸກບືນຢ່າງບໍ່ຢຸດຢ່ອນຕະຫຼອດທັງຄືນເພື່ອພະຍາຍາມຊ່ວຍເຫຼືອຊີວິດຜູ້ຊາຍທັງສອງທີ່ຄ້າງຢູ່ປ່ອງອຸໂມງ. ປະມານ 14 ຊົ່ວໂມງຜ່ານໄປ, ທີມງານຂຸດຄົ້ນຂອງ LXML ກໍສາມາດສ້າງຖ້ານເພື່ອໃຫ້ລົດຈົກສາມາດເຂົ້າເຖິງພື້ນທີ່ໄດ້ ແລະ ສາມາດກອບກູ້ເອົາຜູ້ຊາຍທັງສອງຄົນດັ່ງກ່າວອອກມາໄດ້ຢ່າງປອດໄພ. ພວກກ່ຽວໄດ້ຟື້ນຟູຕົວຢູ່ໂຮງໝໍ ທ່າມກາງສະມາຊິກຄອບຄົວທີ່ໂລ່ງອົກໂລ່ງໃຈ, ທັງສອງຄົນມີບາດແຜ ແລະ ຈຸດຊ້ຳເລັກໜ້ອຍ, ໂຊກດີທີ່ຍັງມີຊີວິດຢູ່.

**ທ່ານ ພໍ ແຮຣີສ໌, ຜູ້ຈັດການໃຫຍ່** LXML ໄດ້ກ່າວວ່າ: "ພວກເຮົາມີຄວາມກັງວົນເປັນຢ່າງຍິ່ງຕໍ່ຄວາມປອດໄພຂອງຊາວບ້ານຈຳນວນໜຶ່ງ ລວມທັງຄອບຄົວຂອງຜູ້ຊາຍທັງສອງ ເຊິ່ງອັນຕະລາຍອາດເຖິງແກ່ຊີວິດໄດ້ ຖ້າຫາກເກີດດິນເຈື່ອນໄປປິດປ່ອງອຸໂມງ. ການກະທຳຂອງຜູ້ຄ້າຂາຍແຮ່ຜິດກົດໝາຍໄດ້ເຮັດໃຫ້ຊີວິດຂອງຊຸມຊົນຫຼາຍສິບຄົນຕົກຢູ່ໃນຄວາມອັນຕະລາຍ. ພວກເຮົາພາວະນາໃຫ້ຜູ້ອື່ນໆຖືອຸປະຕິເຫດຄັ້ງນີ້ເປັນບົດຮຽນ, ຄິດເຖິງ ຄອບຄົວ, ພໍ່ແມ່, ອ້າຍເອື້ອຍນ້ອງ, ສາມີ-ພັນລະຍາ ແລະ ລູກຂອງຕົນ ກ່ອນທີ່ຈະຕັດສິນໃຈເຮັດໃນສິ່ງທີ່ສ່ຽງດັ່ງເຊັ່ນນີ້ໃນອະນາຄົດ."

LXML ໄດ້ລາຍງານອຸປະຕິເຫດດັ່ງກ່າວນີ້ ຕໍ່ ກະຊວງພະລັງງານ ແລະ ບໍ່ແຮ່, ເມືອງວິລະບູລີ ແລະ ແຂວງສະຫວັນນະເຂດ. ນອກຈາກນັ້ນ ກໍໄດ້ສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຊຸມຊົນທ້ອງຖິ່ນ ແລະ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ ເພື່ອ ປູກຈິດສຳນຶກ ແລະ ຢຸດຕິຜູ້ຄ້າຂາຍແຮ່ແບບຜິດກົດໝາຍ ທີ່ເຮັດໃຫ້ຊີວິດຂອງປະຊາຊົນທ້ອງຖິ່ນມີຄວາມສ່ຽງ ກໍຄື ເພື່ອການປ້ອງກັນບໍ່ໃຫ້ເກີດອຸປະຕິເຫດເຊັ່ນນີ້ຂຶ້ນອີກໃນອະນາຄົດ.



# ການພັດທະນາຊຸມຊົນ: ການບໍລິຈາກເຄື່ອງ ເອັກສ໌ ເຣ ໃຫ້ແກ່ ໂຮງໝໍເມືອງວິລະບູລີ



"ເອົາປາໃຫ້ຄົນ, ລາວຈະກິນກຸ້ມມື້ໜຶ່ງ. ສອນຄົນໃຫ້ຮູ້ຕຶກເບັດ, ລາວຈະລ້ຽງກຸ້ມຕົນເອງ ຕະຫຼອດຊີວິດ." ຄຳສຸພາສິດນີ້ມີອາຍຸໄດ້ຢ່າງໜ້ອຍ 120 ປີ ໃນຫຼາຍພາສາ ແລະ ວັດທະນະທຳ. ຄຳສຸພາສິດບອກໃຫ້ເຮົາຮູ້ວ່າ ຈະເປັນການດີກວ່າ ຖ້າຈະສອນຄົນໃຫ້ຮູ້ເຮັດ ດີກວ່າສຳເລັດແລ້ວ ຫຼື ມອບຜົນໃຫ້ເຂົາເຈົ້າ."

ຄຳສຸພາສິດນີ້ ສະທ້ອນອອກໃນ ວຽກງານພັດທະນາຊຸມຊົນຂອງພວກເຮົາແນວໃດ?

ໃນປີ 2020, LXML ໄດ້ຊື້ເຄື່ອງເອັກສ໌ເຣ ໃຫ້ແກ່ ໂຮງໝໍເມືອງວິລະບູລີ ຜ່ານ ກອງທຶນພັດທະນາຊຸມຊົນມູນຄ່າປະມານ US$85.000.

ໂດຍສືບສານຕໍ່ຈາກ ການສະໜັບສະໜູນດັ່ງກ່າວ, ພວກເຮົາໄດ້ສະໜອງທຶນ US$5.000 ເຂົ້າໃສ່ການຝຶກອົບຮົມແພດໝໍ ແລະ ເຈົ້າໜ້າທີ່ຂອງໂຮງໝໍເມືອງວິລະບູລີ ກ່ຽວກັບ ການນຳໃຊ້ເຄື່ອງດັ່ງກ່າວ ລວມທັງວິທີການອ່ານ-ວິເຄາະຜົນ ກໍຄື ການບຳລຸງຮັກສາເຄື່ອງ.

ເຄື່ອງເອກສ໌ເຣ ແລະ ບຸກຄະລາກອນທີ່ມີຄວາມສາມາດຈະຍົກລະດັບ ຄຸນນະພາບການບໍລິການດ້ານສຸຂະພາບຢູ່ ໂຮງໝໍ ແລະ ເມືອງ ຜ່ານການກວດ ແລະ ວິເຄາະທີ່ທັນການ, ຖືກຕ້ອງ ແລະ ຊັດເຈນ ເຊິ່ງ ຖ້າສົມທຽບໃນເມື່ອກ່ອນແມ່ນຕ້ອງໄດ້ສົ່ງຄົນເຈັບໜັກໄປຮອດ ນະຄອນໄກສອນພົມວິຫານ ເພື່ອ ເອັກສ໌ເຣ. ໃນປັດຈຸບັນນີ້ ແມ່ນສາມາດກວດໄດ້ຢ່າງວ່ອງໄວ ຢູ່ ກັບເມືອງວິລະບູລີ.

ມາຮອດປັດຈຸບັນ, ໂຮງໝໍເມືອງວິລະບູລີ ໄດ້ເອກສ໌ເຣ ໃຫ້ແກ່ຄົນເຈັບເກືອບ 2.000 ຄົນ ແລະ ຈຳນວນຄົນເຈັບທີ່ໄດ້ຖືກນຳສົ່ງໄປໂຮງໝໍຢູ່ເມືອງ ແລະ ແຂວງອື່ນກໍເຫັນວ່າຫລຸດລົງ.

ຈາກ ການສະໜັບສະໜູນຂອງ LXML ຜ່ານກອງທຶນພັດທະນາຊຸມຊົນໃນຄັ້ງນີ້, ໂຮງໝໍເມືອງວິລະບູລີ ຈະສືບຕໍ່ບຳລຸງຮັກສາເຄື່ອງເອັກສ໌ເຣ, ຖ່າຍທອດຄວາມຮູ້ ໃຫ້ແກ່ແພດໝໍອື່ນໆ ແລະ ຮຸ່ນຫຼັງ ເພື່ອໃຫ້ສາມາດສະໜອງການບໍລິການດ້ານການແພດສຳຄັນໃຫ້ແກ່ ສະມາຊິກຊຸມຊົນໃນເມືອງວິລະບູລີ 45.000 ກວ່າຄົນ.

ຕັ້ງແຕ່ປີ 2003, ກອງທຶນພັດທະນາຊຸມຊົນໄດ້ລົງທຶນເກືອບ US$910.000 ເຂົ້າໃສ່ ໂຄງການສາທາລະນະສຸກ ເຊິ່ງໃນນັ້ນ 35% ແມ່ນໄດ້ຈັດສັນເຂົ້າໃສ່ ໂຮງໝໍເມືອງວິລະບູລີ (US$317,000). ການສະໜັບສະໜູນດັ່ງກ່າວລວມມີພື້ນຖານໂຄງລ່າງສາທາລະນະສຸກ, ລົດໂຮງໝໍ, ອຸປະກອນການແພດ ແລະ ການສ້າງຂີດຄວາມອາດສາມາດໃຫ້ແກ່ແພດໝໍ.





# LXML ສະໜັບສະໜູນ ການຫຼອມ ແລະ ງານພຸດທະພິເສກສົມໂພດ ພຣະພຸດທະຮູບ ພຣະໃຫຍ່ອົງຕື້ ອຸດຕະມະໂຊກ ຢູ່ ແຂວງ ສະຫວັນນະເຂດ

**ກຸມພາ** 2022 - ບໍລິສັດ ລ້ານຊ້າງ ມິເນໂຣນສ໌ ລິມິເຕັດ (LXML) ບໍ່ຄຳ-ທອງເຊໂປນ ໄດ້ເປັນເຈົ້າພາບເຈົ້າສັດທາສ້າງ ແລະ ຈັດງານພຸດທະພິເສກສົມໂພດ ພຣະພຸດທະຮູບພຣະໃຫຍ່ອົງຕື້ ອຸດຕະມະໂຊກ ຢູ່ ເມືອງວິລະບູລີ, ແຂວງສະຫວັນນະເຂດ ເຊິ່ງເປັນທີ່ຕັ້ງຂອງ ບໍ່ຄຳ-ທອງເຊໂປນ.

ກອງທຶນພັດທະນາຊຸມຊົນຂອງ LXML ໄດ້ສະໜັບສະໜູນການສ້າງພຣະພຸດທະຮູບພຣະໃຫຍ່ອົງຕື້ (ຂະໜາດໜ້າຕັກ 3ມ ສູງ 4,20ມ ຫຼອມດ້ວຍທອງສຳລິດ ແລະ ຮູບຫຼໍ່ພຣະຄູຂີ້ຫອມ (ພຣະບໍລິວານ) ຈຳນວນ 5 ອົງ ຫຼອມດ້ວຍທອງເຫຼືອງ ລວມມູນຄ່າທັງໝົດ 1.125.000.000 ກີບ (US$103.000).

ພຣະພຸດທະຮູບແມ່ນໄດ້ເດີນທາງມາເຖິງ ແຂວງສະຫວັນນະເຂດ ຢ່າງປອດໄພ ເພື່ອມາຈັດງານທາງພຸດທະພິເສກສົມໂພດ ຕາມຮີດຄອງປະເພນີທາງພຸດທະສາດສະໜາຂອງລາວ.



ນອກຈາກນັ້ນ ກໍຍັງມີເຈົ້າສັດທາສ່ວນບຸກຄົນຮ່ວມເປັນເຈົ້າພາບປະກອບສ່ວນເປັນມູນຄ່າລວມ 270.000.000 ກີບ (US$25.000) ໃນການຫຼອມ ຮູບຫຼໍ່ພຣະຄູຂີ້ຫອມອີກ 6 ອົງ ລວມທັງ: ຜູ້ອຳນວຍການໃຫຍ່ LXML ທ່ານ ສະໝານ ອະເນກາ, ປະທານ ບໍລິສັດຄູນໄຊພັດທະນາ ທ່ານ ເຄນຄຳ ສີລາຊາ, ອະດີດປະທານ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດ (LNCCI) ທ່ານ ສີສະຫວາດ ທິລາວົງ, LNCCI ຕາງໜ້າໂດຍ ຮອງປະທານ LNCCI ທ່ານ ດາວວອນ ພະຈັນທະວົງ, ຄະນະບໍລິຫານ ພ້ອມດ້ວຍພະນັກງານຂອງ LNCCI, ປະທານ ບໍລິສັດ ວິດີຊີ ທ່ານ ບຸນລອງ ໄຊໂກສີ ແລະ ປະທານ ບໍລິສັດ ເວດທະສິນກໍ່ສ້າງຄົບວົງຈອນ ຈຳກັດຜູ້ດຽວ ທ່ານ ເວດທະສິນ ສອນເພັດ.

ເມືອງ ວິລະບູລີ ໄດ້ຈັດງານທາງພຸດທະສາດສະໜາເປັນເວລາ 5 ວັນ ນັບແຕ່ວັນທີ 1 ຫາ 5 ກຸມພາ 2022 ລວມທັງພິທີສົມໂພດພຣະພຸດທະຮູບ ແລະ ຕັກບາດຖວາຍສັງຄະທານແດ່ພະສົງສຳມະເນນ 109 ອົງ. ມີຫຼາຍພັນຄົນຈາກຊຸມຊົນທ້ອງຖິ່ນ ແລະ ເມືອງອື່ນໆເຂົ້າຮ່ວມງານດັ່ງກ່າວ.

ເຈົ້າໜ້າທີ່ພາກລັດທີ່ເຂົ້າຮ່ວມພິທີໃນວັນທີ 3 ກຸມພາ 2022 ລວມມີ ທ່ານນາງ ສອນສະຫວັນ ວິຍາເກດ, ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ; ທ່ານ ສັນຕິພາບ ພົມວິຫານ, ເຈົ້າແຂວງໆສະຫວັນນະເຂດ; ທ່ານນາງ ຫຼົງທອງ ແສງຕາວັນ, ຮອງເຈົ້າແຂວງໆສະຫວັນນະເຂດ; ທ່ານ ຄຳຜຸຍ ສີບຸນເຮືອງ, ເຈົ້າເມືອງໆວິລະບູລີ; ທ່ານ ບົວສອນ ມະຫາວົງ, ອາດີດເຈົ້າເມືອງໆວິລະບູລີ, ຫົວໜ້າຂະແໜງການຂັ້ນແຂວງ ແລະ ເມືອງ; ຫົວໜ້າແນວໂຮມທ້ອງຖິ່ນ ແລະ ພາກສ່ວນອື່ນໆ.

**ທ່ານ ສະໝານ ອະເນກາ, ຜູ້ອຳນວຍການໃຫຍ່ຂອງ** LXML ໄດ້ກ່າວວ່າ: "ພວກເຮົາມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ໄດ້ປະກອບສ່ວນໃສ່ການຫຼອມ ແລະ ສົມໂພດພຣະພຸດທະຮູບພະໃຫຍ່ອົງຕື້. ການປະກອບສ່ວນນີ້ສະແດງເຖິງຄວາມເຄົາລົບນັບຖືທີ່ມີມາຢ່າງຍາວນານຂອງ LXML ຕໍ່ ຮີດຄອງປະເພນີ ແລະ ວັດທະນະທຳລາວ ກໍຄື ຄວາມໝາຍໝັ້ນຂອງບໍລິສັດໃນການສົ່ງເສີມການພັດທະນາຊຸມຊົນທ້ອງຖິ່ນ."

ໃນສອງ-ສາມທົດສະຫວັດຜ່ານມາ, LXML ໄດ້ບໍລິຈາກໂລຫະທອງ ແລະ ທຶນຢ່າງເປັນປະຈຳ ເຂົ້າໃນການສ້າງຮູບຫຼໍ່ເປັນອະນຸສອນທີ່ສຳຄັນໃນ ສປປ ລາວ ເປັນຕົ້ນ ຮູບຫຼໍ່ພຣະພູດທະຮູບທີ່ສຳຄັນຢູ່ແຂວງ ສະຫວັນນະເຂດ, ຫົວພັນ, ບໍລິຄຳໄຊ, ໄຊຍະບູລີ, ອັດຕະປື ແລະ ບັນດາບ້ານຢູ່ອ້ອມຂ້າງບໍ່ຄຳ-ທອງເຊໂປນ ກໍຄື ການສ້າງ ຍອດຊໍ່ຟ້າຂອງຫໍຫຼັກເມືອງ ນະຄອນຫຼວງວຽງຈັນ, ເຄື່ອງໝາຍກາຊາດຂອງສະພາແຫ່ງຊາດ ແລະ ສຳນັກງານປະທານປະເທດ.

ມີຫຼາຍຄົນທີ່ອາດແປກໃຈເມື່ອຮູ້ວ່າ LXML ໄດ້ ບໍລິຈາກທອງ ຈາກບໍ່ຄຳ-ທອງເຊໂປນ ເຂົ້າໃນການສ້າງຮູບຫຼໍ່ຈຳລອງອົງສົມເດັດພຣະເຈົ້າອານຸວົງ ຢູ່ ນະຄອນຫຼວງວຽງຈັນ ທີ່ພວກເຮົາເຫັນໃນທຸກມື້ເວລາກາຍໄປກາຍມາຢູ່ແຄມຂອງ.

# ການຂົນຂວາຍຊຸມຊົນກ່ຽວກັບ ຄວາມປອດໄພໃນບໍ່ແຮ່

ນັບຕັ້ງແຕ່ເດືອນມັງກອນ 2022 ເປັນຕົ້ນມາ, ທີມງານພົວພັນຊຸມຊົນຂອງພວກເຮົາ ໄດ້ລົງຂົນຂວາຍສະມາຊິກຊຸມຊົນກ່ຽວກັບ ຄວາມສ່ຽງຂອງການເຂົ້າໄປໃນພື້ນທີ່ບໍ່ແຮ່ແບບບໍ່ໄດ້ຮັບອະນຸຍາດ ແລະ ບັນຫາດ້ານຄວາມປອດໄພທີ່ກ່ຽວຂ້ອງ. ການສືບຕໍ່ເຮັດວຽກຢ່າງໃກ້ຊິດກັບຫົວໜ້າແນວໂຮມທ້ອງຖິ່ນແມ່ນມີຄວາມສຳຄັນ ໃນການເຜີຍແຜ່ ແລະ ກະຈາຍຂໍ້ຄວາມກ່ຽວກັບ ຄວາມອັນຕະລາຍຕໍ່ຄວາມປອດໄພ ແລະ ການເຂົ້າເຖິງ ພື້ນທີ່ຂຸດຄົ້ນບໍ່ແຮ່.

ມາຮອດປັດຈຸບັນ, ທີມງານຂອງພວກເຮົາໄດ້ເຂົ້າເຖິງ 61 ຄົນ ໃນ 5 ບ້ານ, ໂດຍໄດ້ປູກຈິດສຳນຶກກ່ຽວກັບ ຄວາມອັນຕະລາຍຂອງການເຂົ້າພື້ນທີ່ຂຸດຄົ້ນບໍ່ແຮ່ແບບບໍ່ໄດ້ຮັບອະນຸຍາດ ລວມທັງ ຄວາມປອດໄພຕາມເສັ້ນທາງລົດແກ່ແຮ່ ແລະ ຄວາມອັນຕະລາຍອື່ນໆ.

ອີງຕາມມາດຕະການປ້ອງກັນ COVID-19 ຈຶ່ງໄດ້ຈຳກັດຈຳນວນຜູ້ເຂົ້າຮ່ວມ ສະເພາະຄະນະຫ້ອງການບ້ານ ແລະ ເຈົ້າໜ້າທີ່ທ້ອງຖິ່ນ ຜູ້ທີ່ຈະປະກາດເນື້ອໃນຂໍ້ຄວາມຕໍ່ ທາງໂທລະໂຄ່ງ ແລະ ປາກຕໍ່ປາກ.

ນອກຈາກຊ່ອງທາງນີ້ແລ້ວ, ທີມງານພົວພັນຊຸມຊົນກໍຍັງຂົນຂວາຍສະມາຊິກຊຸມຊົນກ່ຽວກັບ ປະເດັນສຳຄັນທີ່ຕິດພັນກັບ ການພັດທະນາຊຸມຊົນ ແລະ ໂຄງການຄຳ-ທອງເຊໂປນ.

ທີມງານຂົນຂວາຍຊຸມຊົນຍັງຈະລົງຢ້ຽມຢາມອີກ ບ້ານ ອ້ອມຂ້າງ ບໍ່ຄຳ-ທອງ ເຊໂປນ ເປັນໄລຍະ ເພື່ອສືບຕໍ່ ເຜີຍແຜ່ຂໍ້ຄວາມກ່ຽວກັບ ຄວາມປອດໄພໃກ້ພື້ນທີ່ຂຸດຄົ້ນບໍ່ແຮ່.





ທອງນ້ຳໜັກ 110 ກິໂລກຣັມ ໄດ້ບໍລິຈາກໃຫ້ແກ່ ວັດທາດຝຸ່ນ ເພື່ອຫຼໍ່ເປັນພະພຸດທະຮູບຈຳນວນ 5 ອົງ ເມື່ອວັນທີ 9 ກຸມພາ 2022.



ຮູບແບບການຊີເຈາະ ແລະ ລະເບີຫີນ ຢູ່ບໍ່ດິສໂກເວີຣີ ຕາເວັນຕົກ2A.



ພະພຸດທະຮູບອົງຕື້ ເດີນທາງເຖິງເມືອງ ວິລະບູລີ ຢ່າງປອດໄພ ເມື່ອວັນທີ 20 ມັງກອນ 2022.



ຮູບຕາເວັນຂຶ້ນ ຢູ່ທີ່ໂຮງງານສະໜາມເຊໂປນ.



ລົດຕັກ ສຳລັບບໍ່ໃຕ້ດິນໄດ້ມາຮອດສະໜາມເຊໂປນ.



ສິງຫາ 2021-ເຈົ້າແຂວງສະຫວັນນະເຂດ ຢ້ຽມຢາມພາກສະໜາມເຊໂປນ ເພື່ອທົບທວນບັນດາມາດຕະການຄວບຄຸມພະຍາດ COVID-19.



ທີມງານຊີເຈາະ ແລະ ລະເບີດຫີນ.



# ຜົນການປະຕິບັດງານປີ 2021

- **ເລີ່ມຂຸດຄົ້ນແຮ່** ທີ່ບໍ່ຜາວັດ ແລະ ບໍ່ວັງຍາງ.
- **ເລີ່ມວຽກໜ້າດິນ** ສຳລັບການຂະຫຍາຍອ່າງນ້ຳຫາງແຮ່.
- ເລີ່ມການຂະຫຍາຍໃຫຍ່ລະບົບແຍກຄຳ.
- **ເລີ່ມສຳຫຼວດໃນເຂດພາກພື້ນ** ພາຍຫຼັງໄດ້ໂຈະໄປຫຼາຍປີ.
- **ເລີ່ມການນຳໃຊ້ໂຮງງານອົກຊີແຊນ.**
- **ມຸ່ງໜ້າດຳເນີນການສຳລັບບໍ່ໄຕ້ດິນ.**
- **ກິດຈະກຳການຂຸດຄົ້ນແຮ່** ເພື່ອປັບປຸງປະສິດທິພາບ ແລະ ຜົນຜະລິດ (ຈັກຊໍ, ເຄື່ອງສະແກນປະລິມານແຮ່ຢູ່ເທິງລົດ, ນຳໃຊ້ລົດຈັກໃໝ່, ສູນຄຸ້ມຄອງການດຳເນີນງານບໍ່ແຮ່)
- **ສູນຄຸ້ມຄອງການດຳເນີນງານບໍ່ແຮ່ 'ເປັນລະບົບອອນລາຍ'**: ລະບົບ HxGN.

- **ພະນັກງານ ແລະ ຜູ້ຮັບເໝົາ 99% ໄດ້ຮັບວັກຊີນ COVID-19.**
- **ສັກວັກຊີນ COVID-19 ເຂັມກະຕຸ້ນ** ໂດຍໃຊ້ AstraZeneca.
- **>45,000 ເທື່ອກວດຫາເຊື້ອ COVID-19** ໃນພາກສະໜາມ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ.

- **ກໍ່ສ້າງປະຕູນ້ຳ** ສຳລັບການປົກປ້ອງສິ່ງແວດລ້ອມ ແລະ ການດຳເນີນງານທີ່ປອດໄພ.

- ປ່ຽນຄອມພິວເຕີ.
- ປັບປຸງລະບົບວາຍຟາຍ ແລະ 4G
- ປັບປຸງລະບົບວິນໂດ້ 10

- ລາງວັນທຸລະກິດຊັ້ນນຳດີເດັ່ນ 2021.
- ຮັກສາລະດັບການດຳເນີນງານ A+.
- ໄດ້ຕໍ່ໃບອະນຸຍາດລົງທຶນ.
- ລົງນາມບົດບັນທຶກຄວາມເຂົ້າໃຈລະຫວ່າງ LXML ແລະ ກະຊວງປ້ອງກັນປະເທດ, ຕໍ່ຂອບວຽກງານເກັບກູ້ລະເບີດທີ່ບໍ່ທັນແຕກ.
- ການຢ້ຽມຢາມພາກສະໜາມຂອງການນຳຂັ້ນສູງ: ປະທານສະພາແຫ່ງຊາດ, ກຳມະການກົມການເມືອງສູນກາງພັກ ແລະ ປະທານກວກກາພັກ, ເຈົ້າແຂວງສະຫວັນນະເຂດ.
- ສະໜອງ US$500,000 ສຳລັບວຽກງານປ້ອງກັນ COVID-19.
- ເປີດໂຕເວັບໄຊ້ຂອງ LXML, ແລະ ການນຳໃຊ້ສື່ສັງຄົມອອນລາຍ.
- ເປີດກຸ່ມເຟສບຸກ ສຳລັບ ພະນັກງານ ແລະ ຜູ້ຮັບເໝົາຂອງ LXML.
- ການກັບມາດຳເນີນງານຂອງສູນຫວັຍກົງ.




ພຶດສະພາ 2021 – LXML ໄດ້ປະກອບສ່ວນເປັນເງິນຈຳນວນ 116.115.000 ກີບໃຫ້ແກ່ແຂວງສະຫວັນນະເຂດ ເພື່ອສ້າງຫ້ອງນ້ຳ-ຫ້ອງອາບນ້ຳ ສຳລັບໂຮງໝໍພາກສະໜາມປິ່ນປົວ COVID-19 ຢູ່ ໂຮງຮຽນວິທະຍາໄລວິທະຍາສາດສຸຂະພາບສະຫວັນນະເຂດ.




ພຶດສະພາ 2021 - LXML ໄດ້ບໍລິຈາກ 60 ລ້ານກີບໃຫ້ແກ່ ໜ່ວຍກູ້ໄພໃນນະຄອນຫຼວງວຽງຈັນ ແລະ ແຂວງສະຫວັນນະເຂດ ເພື່ອສະໜັບສະໜູນຄວາມອາດສາມາດໃນການຮັບມືກັບເຫດການສຸກເສີນ ໂດຍສະເພາະໃນໄລຍະການລະບາດຂອງພະຍາດ COVID-19.




ມິຖຸນາ 2021 – LXML ໄດ້ບໍລິຈາກ US$15.000 ໃຫ້ແກ່ແຂວງສະຫວັນນະເຂດ ແລະ 50 ລ້ານກີບໃຫ້ແກ່ເມືອງວິລະບູລີ ເພື່ອສະໜັບສະໜູນການຮັບມືກັບ COVID-19.




ກັນຍາ 2021 – LXML ໄດ້ບໍລິຈາກເຄື່ອງກວດແບບ RT-PCR ແລະ ອຸປະກອນກ່ຽວຂ້ອງຕ່າງໆ ໃຫ້ແກ່ ພະແນກສາທາລະນະສຸກແຂວງສະຫວັນນະເຂດ ເພື່ອປັບປຸງຄວາມອາດສາມາດໃນການກວດຫາເຊື້ອ ແລະ ຄົ້ນຫາຜູ້ຕິດເຊື້ອໂຄວິດພາຍໃນແຂວງ.

## ຕົວເລກ ແລະ ຂໍ້ມູນ ທີ່ສຳຄັນຂອງ ບໍ່ຄຳ-ທອງເຊໂປນ

### ການພັດທະນາຄວາມສາມາດ

- **US$4 ລ້ານ** ທຶນການສຶກສາຂັ້ນສາມ ໃຫ້ແກ່ພະນັກງານລາວ
- **US$0.68 ລ້ານ** ສະໜັບສະໜູນອຸປະກອນຝຶກອົບຮົມ ແກ່ໂຮງຮຽນວິຊາຊີບ ສະຫວັນນະເຂດ
- **40,000 ຊມ** ຝຶກອົບຮົມ/ປີ
- **ໂຄງການຝຶກອົບຮົມຂີດຄວາມສາມາດໃນພາກສະໜາມ** (ຄູຝຶກ, ການຝຶກອົບຮົມທາງການ ແລະ ຄຽງຄູ່ກັບການປະຕິບັດວຽກ)

### ຊຸມຊົນ

- **US$54 ລ້ານ** – ເກັບກູ້ LXML UXO (58,500 ລູກ ແລະ ໃນພື້ນທີ່ 5,700ຮຕ)*
- **US$48.7 ລ້ານ** – ລາຍຮັບຈາກການພັດທະນາທຸລະກິດຊຸມຊົນ*
- **US$10.8 ລ້ານ** – ກອງທຶນພັດທະນາທ້ອງຖິ່ນ*
- **US$3.2 ລ້ານ** – ກອງທຶນພັດທະນາບ້ານ (2010-2018)
- **US$125 ພັນ** – ກອງທຶນຊຸກຍູ້ຊີວິດການເປັນຢູ່ໃຫ້ແກ່ກຸ່ມຜູ້ດ້ອຍໂອກາດ (2019 - ຮອດປັດຈຸບັນ)

### ຊຸມຊົນ

- **US$1.6 ລ້ານ** – ອານຸລັກມໍລະດົກວັດທະນະທຳແຫ່ງຊາດ ໂດຍຜ່ານແຜນງານຄົ້ນຄວ້າບູຮານວິທະຍາ
- **US$2.9 ລ້ານ** – ໃຫ້ແກ່ລັດທະບານລາວ, LXML-ຢູນິເຊບ, ໂຄງການ 1000 ວັນ (2012-ຮອດປັດຈຸບັນ)

### ຜົນປະໂຫຍດແກ່ ສປປ ລາວ

- **US$1.6 ຕື້**, ປະກອບສ່ວນລາຍຮັບ (ອາກອນ, ຄ່າຊົບພະຍາກອນ, ເງິນປັນຜົນ)*

(ຕົວເລກຮອດ ມີນາ 2022)

*ຕົວເລກນັບແຕ່ເລີ່ມການດຳເນີນງານມາຮອດປັດຈຸບັນ

### ພະນັກງານ

- LXML **2,174** (95% ຄົນລາວ)
- ຄົນລາວ **2,048** ຄົນ
- ຕ່າງປະເທດ **126** ຄົນ
- ຜູ້ຮັບເໝົາລາວ **2,378** ຄົນ
- ຜູ້ຮັບເໝົາຕ່າງປະເທດ **122** ຄົນ

### ການບໍລິຈາກ

- **US$1.5 ລ້ານ** – ອຸປະກອນການແພດ, ໄພນ້ຳຖ້ວມ, ໜ່ວຍກູ້ໄພສຸກເສີນ ແລະ ອື່ນໆ
- **US$0.5 ລ້ານ** – ຮັບມືກັບການແຜ່ລະບາດຂອງ COVID-19

## ຜົນປະໂຫຍດໂດຍກົງ ໃຫ້ແກ່ ລັດຖະບານ ສປປ ລາວ

| ປະເພດລາຍຈ່າຍ | 2003 | 2004 | 2005 | 2006 | 2007 | 2008 | 2009 | 2010 | 2011 | 2012 | 2013 | 2014 | 2015 | 2016 | 2017 | 2018 | 2019 | 2020 | 2021 |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| ອາກອນກຳໄລ | - | - | 7,085 | 49,597 | 90,416 | 77,982 | 57,519 | 92,273 | 145,250 | 120,200 | 91,045 | 71,339 | 36,151 | - | - | - | 2,000 | 2,200 | 13,348 |
| ຄ່າຊົບພະຍາກອນ (ຄຳ) | 1,407 | 1,669 | 3,112 | 4,376 | 3,347 | 3,549 | 4,732 | 5,800 | 5,024 | 5,491 | 2,538 | 29 | - | - | - | - | - | 3,500 | 14,819 |
| ຄ່າຊົບພະຍາກອນ (ທອງ) | - | - | 4,055 | 16,994 | 19,295 | 18,570 | 14,565 | 20,734 | 31,365 | 30,378 | 30,607 | 27,579 | 22,093 | 17,226 | 17,533 | 20,989 | 19,061 | 11,007 | 2,367 |
| ອາກອນລາຍໄດ້ | 1,101 | 1,538 | 1,943 | 1,947 | 2,727 | 3,893 | 3,377 | 5,053 | 5,055 | 5,877 | 5,728 | 4,404 | 3,767 | 2,644 | 2,511 | 2,562 | 2,332 | 2,549 | 2,967 |
| ຄ່າສຳປະທານທີ່ດິນ | 5 | 33 | 33 | 33 | - | - | 113 | - | 90 | - | 145 | 50 | 50 | 49 | 49 | 49 | 61 | 61 | 61 |
| ພາສີນ້ຳມັນ+ນ້ຳມັນເຄື່ອງ | - | - | 2,000 | 2,000 | 2,000 | 4,200 | 2,000 | 2,500 | 4,835 | 4,822 | 4,152 | 3,863 | 4,360 | 2,686 | 3,920 | 3,786 | 4,695 | 6,932 | 6,683 |
| ເງິນປັນຜົນ | - | - | - | - | 9,303 | 11,300 | 2,000 | 32,900 | 15,000 | 28,500 | 10,000 | 10,000 | 6,500 | - | - | 27,170 | - | - | - |
| ລວມລາຍຮັບທັງໝົດ ຈ່າຍໃຫ້ລັດຖະບານ ລາວ | 2,508 | 3,207 | 18,228 | 74,947 | 127,087 | 122,994 | 84,306 | 159,259 | 205,639 | 189,133 | 144,215 | 117,265 | 72,871 | 26,122 | 24,014 | 54,559 | 28,597 | 26,838 | 40,843 |
| **ລວມທັງໝົດ** | - | - | - | - | - | - | 433,278 | 592,536 | 798,176 | 987,309 | 1,131,525 | 1,248,789 | 1,328,966 | 1,364,449 | 1,388,463 | 1,443,022 | 1,471,619 | 1,498,457 | 1,553,035 |

ຕົວເລກທັງໝົດເປັນ US$ ຫົວພັນ ('000)

ຕິດຕໍ່ພວກເຮົາທີ່:
ໂທ: +856 21 268 268
ອີເມວ: lxml.infomation@lxml.la